ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*************************

ກອງທຶນປົກປັກຮັກສາສິ່ງແວດລ້ອມ

ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ສປປ ລາວ

(ໄລຍະເພີ້ມ)

# ມາດຕະການ

# ປ້ອງກັນສິ່ງແວດລ້ອມ ແລະ ສັງຄົມ

**28 ສິງຫາ 2009**

# ຄຳນຳ

ມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ ຈະໄດ້ເອົາມານຳໃຊ້ກັບໂຄງການຍ່ອຍທັງໝົດທີ່ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ຈະໄດ້ຮັບຮອງເອົາ ໃນເວລາພິຈາລະນາການໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກແລະທຶນຮອນ ຈາກ ຄສລ (ໂຄງການສິ່ງແວດລ້ອມແລະສັງຄົມຢູ່ ສປປລາວ). ຄະນະຄຸ້ມຄອງ ຄສລ ຂອງ ກປສ ເປັນຜູ້ຮັບຜິດຊອບເພື່ອໃຫ້ເຮັດຕາມມາດຕະການດັ່ງກ່າວ ລວມທັງເກັບເອກະສານໄວ້ໃນແຟ້ມຂອງໂຄງການ ເພື່ອວ່າຄະນະຜູ້ແທນທະນາຄານໂລກຈະໄດ້ມາເບິ່ງຕິດຕາມພາຍຫຼັງ. ເອກະສານສະບັບນີ້ ຖືວ່າເປັນເອກະສານທີ່ມີຊີວິດຊີວາ ແລະ ອາດປັບປຸງແລະປ່ຽນແປງໄປກັບສະພາບຫຼືຂອບເຂດຂອງກິດຈະກຳທີ່ມີການປ່ຽນແປງ. ການປຶກສາຫາລືກັບທະນາຄານໂລກຢ່າງໃກ້ສິດແລະການຕົກລົງເຫັນດີນຳກັນກ່ຽວກັບມາດຕະການ ທີ່ຈະໄດ້ປັບປຸງ ແມ່ນມີຄວາມຈຳເປັນ.

# ສາລະບານ

I. ພາກສະເໜີ ....................................................................................................................4
II. ເນື້ອໃນຂອງໂຄງການ ........................................................................................................5
III. ຂະບວນການກວດມາດຕະການສິ່ງແວດລ້ອມແລະສັງຄົມ ...........................................................6
IV. ກົນໄກການຈັດຕັ້ງ ...........................................................................................................13
ເອກກະສານຂັດຕິດ ຂ: ນະໂຍບາຍກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ຄສລ ເພີ້ມ ກວດມາດ ຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ ..........................................................................22
ເອກກະສານຂັດຕິດ ຄ. ເນື້ອໃນພັດທະນາຊົນເຜົ່າ ...............................................................34
ເອກກະສານຂັດຕິດ ໆ. ເນື້ອໃນພັດທະນາຊົນເຜົ່າ ...............................................................40

## I. ພາກສະເໜີ

1. ມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ ໄດ້ອອກແບບເພື່ອເຮັດໃຫ້ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ບໍ່ດີທີ່ອາດເກີດຂຶ້ນຍ້ອນການຈັດຕັ້ງປະຕິບັດໂຄງການຍ່ອຍ ຂອງ ຄສລ ໃຫ້ໜ້ອຍລົງ. ຍ້ອນຈຸດປະສົງແລະຂອບເຂດຂອງໂຄງການ, ຄາດວ່າໂຄງການຍ່ອຍຂອງ ຄສລ ຈະບໍ່ສ້າງຜົນກະທົບດ້ານສັງຄົມແລະສິ່ງແວດລ້ອມ ທີ່ບໍ່ດີ. ຢ່າງໃດກໍດີ, ມັນມີຄວາມສ່ຽງທີ່ບາງໂຄງການຍ່ອຍອາດມີການເວນທີ່ດິນຂຶ້ນຫຼືການຈຳກັດການເຂ□າໄປນຳໃຊ້ຊັບພະຍາກອນ ເລັກນ້ອຍ, ຫຼືອາດມີຜົນກະທົບ ຕໍ່ຊຸມຊົນທີ່ເປັນຊົນເຜົ່າ, ຊັບພະຍາກອນວັດທະນະທຳທີ່ເປັນວັດຖຸ, ຫຼືຖິ່ນອາໄສທຳມະຊາດ. ເພື່ອຫຼີກລ້ຽງຫຼືຫຼຸດຜ່ອນຄວາມສ່ຽງເຫຼົ່ານີ້, ບັນຊີສິ່ງທີ່ເປັນທາງລົບ; ການກວດໃຫ້ຖືກຕາມນະໂຍບາຍແລະມາດຕະການ ສະເພາະ ຈະມີເພື່ອຮັບປະກັນວ່າໄດ້ເຫັນບັນຫາແລະຈັດຕັ້ງມາດຕະການທີ່ເໝາະສົມ. ອັນນີ້ກໍເພື່ອ ຮັບປະກັນວ່າໂຄງການຍ່ອຍຫຼືກິດຈະກຳຂອງ ຄສລ ແມ່ນຖືກກັບລະບຽບກົດໝາຍຂອງລັດຖະບານ ສປປລາວ ແລະນະໂຍບາຍຕ່າງໆຂອງທະນາຄານໂລກ ດັ່ງນີ້: ນະໂຍບາຍປ້ອງກັນຜົນກະທົບ: ການປະເມີນຜົນກະທົບດ້ານສິ່ງແວດລ້ອມ (OP 4.01), ຖິ່ນອາໄສທຳມະຊາດ (OP 4.04), ຊັບພະຍາກອນວັດທະນະທຳທີ່ເປັນວັດຖຸ (OPN 4.11), ການຍົກຍ້າຍຈັດສັນປະຊາຊົນແບບບໍ່ສະໝັກໃຈ (OP 4.12), ແລະ ຊົນເຜົ່າສ່ວນນ້ອຍ (OP 4.20) ແລະຖ້າເປັນໄປໄດ້ ກໍເຮັດໃຫ້ຜົນໄດ້ທາງບວກເພີ້ມຂຶ້ນຫຼາຍທີ່ສຸດ.

2. ມາດຕະການສິ່ງແວດລ້ອມແລະສັງຄົມ ຈະໄດ້ນຳໃຊ້ກັບທຸກໆໂຄງການຍ່ອຍ ແລະ ວຽກງານຂອງມັນ ເຊິ່ງຈະໄດ້ຖືກຈັດຕັ້ງປະຕິບັດພາຍໃຕ້ 2 ກອງທຶນຍ່ອຍ ຂອງ ກປສ. ໃນເມື່ອໂຄງການ ມີເປ□າໝາຍປັບປຸງການຄຸ້ມຄອງສິ່ງແວດລ້ອມ, ມີການສ້າງຄວາມອາດສາມາດເປັນຈຸດສຸມຕ□ນຕໍ ແລະ ຈະໄດ້ຖືກຈັດຕັ້ງປະຕິບັດເປັນໂຄງການຂະໜາດນ້ອຍ, ຈຶ່ງຄາດວ່າຈະບໍ່ມີຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມ ແລະສັງຄົມເກີດຂຶ້ນ. ແຕ່ຢ່າງໃດກໍດີ, ບາງວຽກງານກໍ່ສ້າງຂະໜາດນ້ອຍ ຫຼື ວຽກງານຄຸ້ມຄອງປ່າສະຫງວນ ອາດຈະຮຽກຮ້ອງໃຫ້ມີການເວນຄືນທີ່ດິນຈຳນວນໜຶ່ງ ຫຼື ອາດຈະມີຜົນກະທົບທາງລົບຂະໜາດນ້ອຍທາງດ້ານສັງຄົມ ແລະ ສິ່ງແວດລ້ອມ. ຕາມລັກສະນະຂອງມັນ, ວຽກງານເຫຼົ່ານີ້ຈະໄດ້ຮັບການຊ່ວຍເຫຼືອ ຈາກກອງທຶນຍ່ອຍ "ລົງທຶນແກ່ ຊີວະນາໆພັນແລະຊຸມຊົນ" ແລະ ບາງໂຄງການ ຂອງກອງທຶນຍ່ອຍ "ຈັດຕັ້ງປະຕິບັດນະໂຍບາຍແລະປັບປຸງຄວາມສາມາດ" ອາດມີບາງວຽກງານກໍ່ສ້າງຂະໜາດນ້ອຍ. ມາດຕະການດັ່ງກ່າວ ໄດ້ອະທິບາຍເນື້ອໃນຂອງໂຄງການ (ພາກ II), ຂະບວນການກວດມາດຕະການດັ່ງກ່າວ (ພາກ III), ແລະກົນໄກການຈັດຕັ້ງປະຕິບັດ (ພາກ IV).

## II. ເນື້ອໃນຂອງໂຄງການ

3. ຈຸດປະສົງການພັດທະນາໂຄງການ ແມ່ນເພື່ອປັບປຸງການຄຸ້ມຄອງບັນຫາສິ່ງແວດລ້ອມແລະສັງຄົມ ທີ່ຕິດພັນກັບການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງຢູ່ ສປປລາວ. ເພື່ອບັນລຸຈຸດປະສົງດັ່ງກ່າວ, ຄສລ ໃຫ້ການສະໜັບສະໜູນດ້ານການເງິນ ແກ່ອົງການລັດ, ອົງການບໍ່ສັງກັດລັດ, ແລະຊຸມຊົນ ໂດຍໃຫ້ບູລິມະສິດໃຫ້ແກ່: (i) ການສ້າງຄວາມສາມາດດ້ານນະໂຍບາຍແລະການຈັດຕັ້ງໃຫ້ສາມແຂວງເປ□າໝາຍ (ບໍລິຄຳໄຊ, ຄຳມ່ວນແລະສະຫວັນນະເຂດ), (ii) ການຄຸ້ມຄອງອ່າງນ້ຳແບບ ປະສົມປະສານ ຢູ່ນ້ຳເທີນນ້ຳກະດິງ; (iii) ການສ້າງຄວາມສາມາດດ້ານການຈັດຕັ້ງ ເພື່ອຈັດຕັ້ງປະຕິບັດມາດຕະການດ້ານສິ່ງແວດລ້ອມແລະສັງຄົມ; (iv) ຈັດຕັ້ງປະຕິບັດນະໂຍບາຍ ເພື່ອສົ່ງເສີມການພັດທະນາໄຟຟ້ານ້ຳຕົກແບບຍືນຍົງ; ແລະ (v) ປົກປັກຮັກສາແລະອະນຸລັກຖິ່ນອາໄສທຳມະຊາດແລະຊີວະນາໆພັນ. ກິດຈະກຳເຫຼົ່ານີ້ ຈະໄດ້ຮັບທຶນຊ່ວຍເຫຼືອລ້າຕາມກົນໄກໂຄງການຍ່ອຍ ຊຶ່ງທຶນຈະໄຫຼຜ່ານກອງທຶນຍ່ອຍ (ນະໂຍບາຍແລະຊີວະນາໆພັນ) ທີ່ສ້າງຂຶ້ນໃນ ກປສ.

4. ຄສລ ປະກອບດ້ວຍ 3 ວຽກໃຫຍ່ດັ່ງນີ້:

- ວຽກທີ 1: ***ກອງທຶນຍ່ອຍ "ຈັດຕັ້ງປະຕິບັດນະໂຍບາຍ ແລະ ປັບປຸງຄວາມສາມາດ"***. ວຽກນີ້ຈະສ້າງຄວາມເຂັ້ມແຂງໃນຂັ້ນສູນກາງ, ແຂວງແລະເມືອງດັ່ງນີ້: (i) ສ້າງແລະຈັດຕັ້ງ ມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ; (ii) ປະເມີນຜົນດ້ານສິ່ງແວດລ້ອມແລະຕິດຕາມກວດກາປະຕິບັດຕາມຄວາມຮັບຜິດຊອບດ້ານການຈັດຕັ້ງ ໃນການຄຸ້ມຄອງທາງດ້ານສິ່ງແວດລ້ອມ; (iii) ວຽກຄຸ້ມຄອງອ່າງນ້ຳ ແບບປະສົມປະສານ; (iv) ນະໂຍບາຍໄຟຟ້ານ້ຳຕົກແບບຍືນຍົງ; ແລະ (v) ວຽກສຶກສາແລະສ້າງຈິດສຳນຶກດ້ານສິ່ງແວດລ້ອມ.
- ວຽກທີ 2: ***ກອງທຶນຍ່ອຍ "ລົງທຶນແກ່ຊີວະນາໆພັນແລະຊຸມຊົນ"***. ວຽກນີ້ແນໃສ່ສະໜັບສະໜູນແຜນສ້າງຄວາມເຂັ້ມແຂງໃນວິທີການອະນຸລັກແລະກິດຈະກຳປັບປຸງຊີວິດການເປັນຢູ່ ຢູ່ໃນແລະອ້ອມແອ້ມປ່າສະຫງວນ (ສ້າງຈາກວິທີການວາງແຜນອະນຸລັກ ທີ່ໄດ້ພັດທະນາສຳລັບປ່າສະຫງວນນາກາຍນ້ຳເທີນແລະເຂດເຊື່ອມຕໍ່) ແລະປັບປຸງສະພາບສິ່ງແວດລ້ອມຂອງທ້ອງຖິ່ນຈາກກິດຈະກຳຮ່ວມມືກັບຊຸມຊົນ, ອຳນາດການປົກຄອງທ້ອງຖິ່ນ, ອົງການສັງຄົມຢູ່ພາກກາງຂອງ ສປປລາວ;
- ວຽກທີ 3: *"ການສະໜັບສະໜູນການຄຸ້ມຄອງແລະຕິດຕາມກວດກາ"*. ວຽກນີ້ ຈະສະໜັບສະໜູນ ກິດຈະກຳດັ່ງຕໍ່ໄປນີ້: ການປະຕິບັດງານຂອງ ກປສ ປະຈຳວັນ, ໂດຍສະເພາະ ກອງທຶນຍ່ອຍນະໂຍບາຍແລະຊີວະນາໆພັນ; ການຕະຫຼາດແລະພັດທະນາທຸລະກິດຂອງກອງທຶນຍ່ອຍ ເພື່ອໃຫ້ຜູ້ທີ່ຈະໄດ້ຜົນປະໂຫຍດຊຸມບົດສະເໜີໂຄງການຍ່ອຍ; ສ້າງແລະຈັດຕັ້ງປະຕິບັດຂະບວນການຕິດຕາມກວດກາ, ຕີລາຄາແລະເຜີຍແຜ່ ເພື່ອປະເມີນຜົນງານຂອງສອງກອງທຶນຍ່ອຍທີ່ກ່າວມານັ້ນ ແລະ ຝຶກອົບຮົມພະນັກງານຂອງ ຄສລ ເພື່ອເຮັດວຽກເຫົ່ງນີ້.

5. ກິດຈະກຳມີປະເພດດັ່ງນີ້ (i) ທຶນສຳລັບການສ້າງຄວາມສາມາດສຳລັບວຽກ 1 ຊຶ່ງລວມເອົາ ການສຶກສາ, ການສຳຫຼວດ, ກອງປະຊຸມ, ການຝຶກອົບຮົມ, ການສ້າງປຶ້ມແນະນຳເຕັກນິກ, ການຕີລາຄາ ແລະປະເມີນສະພາບສິ່ງແວດລ້ອມ ແລະ ອື່ນໆ; ແລະ (ii) ທຶນຊ່ວຍເຫຼືອການຄຸ້ມຄອງປ່າສະຫງວນ ແລະສິ່ງແວດລ້ອມຂອງຊຸມຊົນ ແລະກິດຈະກຳປັບປຸງຊີວິດການເປັນຢູ່. ນອກນີ້, ໂຄງການ ຍັງຈະສະໜັບສະໜູນການຊອກຫາຄວາມຊ່ຽວຊານສາກົນ ເພື່ອຈັດຕັ້ງປະຕິບັດບາງວຽກຂອງໂຄງການ.

## III. ຂະບວນການກວດມາດຕະການສິ່ງແວດລ້ອມແລະສັງຄົມ

6. ການກວດມາດຕະການດັ່ງກ່າວ ຈະມີ 4 ບາດກ້າວສຳຄັນດັ່ງນີ້:

### ບາດກ້າວທີ 1: ກວດຕາມບັນຊີທີ່ຫ້າມ

7. *ບັນຊີກິດຈະກຳທີ່ຖືກຫ້າມ:* ເພື່ອຫຼີກລ້ຽງ ຜົນກະທົບຕໍ່ສິ່ງແວດລ້ອມແລະປະຊາຊົນ, ໂຄງການຍ່ອຍທີ່ພົວພັນກັບກິດຈະກຳດັ່ງຕໍ່ໄປນີ້ ຈະບໍ່ມີສິດໄດ້ຮັບທຶນຈາກ ຄສລ:

(i) ການຍົກຍ້າຍຫຼືການມ້າງເຮືອນຫຼືທຸລະກິດໃດໜຶ່ງ.

(ii) ການເວນທີ່ດິນ ທີ່ມີຜົນກະທົບຫຼາຍກວ່າ 200 ຄົນ ຫຼື 40 ຄອບຄົວ.

(iii) ການສ້າງບ້ານໃໝ່ຫຼືຂະຫຍາຍບ້ານເກົ່າເຂ□າໃນຖິ່ນອາໄສທຳມະຊາດຫຼືປ່າສະຫງວນທີ່ມີຢູ່ຫຼືສະເໜີໃໝ່.

(iv) ຄາດວ່າຈະມີຜົນກະທົບຕໍ່ຊົນເຜົ່າທີ່ຢູ່ໃນບ້ານຫຼືຢູ່ບ້ານໃກ້ຄຽງຫຼືເປັນທີ່ຮັບບໍ່ໄດ້ຈາກຊົນເຜົ່າທີ່ໃນບ້ານທີ່ມີຫຼາຍຊົນເຜົ່າ.

(v) ການສູນເສຍຫຼືທຳການການທຳລາຍພື້ນຖານວັດທະນະທຳ ລວມທັງບ່ອນທີ່ມີຄຸນຄ່າດ້ານວັດຖຸບູຮານ (ຍຸກດຶກດຳບັນ), ຊາກສັດດຶກດຳບັນ, ດ້ານປະຫວັດສາດ, ສາດສະໜາ, ວັດທະນະທຳ ແລະ ທຳມະຊາດທີ່ໂດດເດັ່ນ.

(vi) ການສ້າງທາງໃໝ່, ຟື້ນຟູທາງ, ປູທາງ ແລະປັບປຸງທາງເຂ□າໃນຖິ່ນອາໄສທຳມະຊາດ ຫຼືປ່າສະຫງວນທີ່ມີຢູ່ຫຼືກຳລັງສະເໜີໃໝ່;

(vii) ຊື້ເຄື່ອງໄຟຟ້າຫຼືຈັກດູດນ້ຳທີ່ໃຊ້ນ້ຳມັນກາຊວນຫຼືແອັດຊັງ, ຢາປາບສັດຕູພືດ, ຢາຂ້າແມງໄມ້, ຢາຂ້າຫຍ້າ ແລະ ສານເຄມີທີ່ເປັນອັນຕະລາຍອື່ນໆ, ທາດອາສເບສໂຕດ ແລະ ການລົງທຶນທີ່ແຕະຕ້ອງຕໍ່ສິ່ງແວດລ້ອມ.

(viii) ການເຮັດວຽກປ່າໄມ້ຄືການຕັດໄມ້, ການເກັບກູ້ຫຼືການປຸງແຕ່ງຜະລິດຕະພັນໄມ້; ຢ່າງໃດກໍດີ ການສະໜັບສະໜູນການເກັບກູ້ແລະການປຸງແຕ່ງເຄື່ອງປ່າຂອງດົງ ແມ່ນໄດ້ຖືກອະນຸຍາດ ຖ້າມີແຜນຄຸ້ມຄອງເພື່ອນຳໃຊ້ຊັບພະຍາກອນດັ່ງກ່າວໃຫ້ຍືນຍົງ.

(ix) ການນຳເຂ□າຊະນິດພັນໃໝ່ ຖ້າມັນຫາກມີແລ້ວຢູ່ໃນເຂດອ້ອມແອ້ມຫຼືຮູ້ວ່າ ມັນບໍ່ແມ່ນຊະນິດ ທີ່ຄຸກຄາມຢູ່ບ່ອນທີ່ດີກັນ.

(x) ການທັບປ່ຽນຫຼືທຳລາຍຖິ່ນອາໄສທຳມະຊາດຫຼາຍຫຼືເມື່ອບໍ່ເຫັນມັນໄດ້ທາງດ້ານສິ່ງແວດລ້ອມ ແລະ ການອະນຸລັກ ເທົ່າກັບຜົນເສຍ.

(xi) ການກໍ່ສ້າງຂະໜາດໃຫຍ່, ຂະໜາດກາງແລະຂະໜາດນ້ອຍທີ່ຈະເຮັດໃຫ້ມີຜົນກະທົບທີ່ບໍ່ດີຫຼາຍທາງດ້ານສິ່ງແວດລ້ອມ.

(xii) ການຈ່າຍເງິນເດືອນໃຫ້ ພະນັກງານ ຂອງການຈັດຕັ້ງທີ່ໄດ້ຮັບການຊ່ວຍເຫຼືອສໍາລັບ ໂຄງການຍ່ອຍ. ອັດຕາກິນສໍາລັບລົງໄປເຮັດວຽກພາກສະໜາມແລະເດີນທາງ, ການຈ່າຍຄ່າແຮງງານພິເສດ ທີ່ໄດ້ມີສັນຍາເມື່ອເຮັດວຽກໂຄງການຍ່ອຍແລະການຈ່າຍຄ່າແຮງງານຂອງຊຸມຊົນ ແມ່ນອະນຸຍາດໃຫ້ເຮັດໄດ້.

## *ບາດກ້າວທີ 2: ຊອກຮູ້ບັນຫາແລະກະກຽມມາດຕະການຫຼຸດຜ່ອນ*

8. ຖ້າບົດສະເໜີ ໂຄງການບໍ່ຖືກຕັດອອກຈາກການໃຫ້ທຶນຍ້ອນບັນຊີກິດຈະກໍາຫ້າມໃນບາດກ້າວທີ 1, ມັນຈໍາເປັນຕ້ອງຊອກຮູ້ບັນຫາສໍາຄັນກ່ຽວກັບມາດຕະການສິ່ງແວດລ້ອມແລະສັງຄົມແລະວາງມາດຕະການຫຼຸດຜ່ອນກ່ຽວກັບເລື້ອງດັ່ງຕໍ່ໄປນີ້:

- ***ການເວນທີ່ດິນຄືນ:*** ການເວນທີ່ດິນຄືນ ຕ້ອງພະຍາຍາມຫຼີກລ້ຽງທີ່ສຸດ ໂດຍຫາວິທີອອກແບບໂຄງການຍ່ອຍແບບອື່ນ. ຖ້າຈໍາເປັນ, ການເວນທີ່ດິນນ້ອຍໆຄືນ ກໍຕ້ອງເຮັດຕາມຫຼັກການແລະລບຽບທີ່ອະທິບາຍໃນເອກກະສານຂັດຕິດ ຂ. ການປຶກສາຫາລືກັບທະນາຄານໂລກກ່ອນ, ການສ້າງເອກກະສານທີ່ເໝາະສົມ ແລະການກວດຫຼັງຈາກເຮັດແລ້ວ ແມ່ນມີຄວາມຈໍາເປັນ.
- ***ການຈໍາກັດບໍ່ໃຫ້ເຂ□າໄປເອົາຊັບພະຍາກອນ:*** ບົດສະເໜີໂຄງການຍ່ອຍໃດທີ່ສະເໜີໃຫ້ເຫັນວ່າມີການຈໍາກັດໃໝ່ບໍ່ໃຫ້ເຂ□າໄປເອົາຊັບພະຍາກອນໃນປ່າສະຫງວນ ທີ່ໄດ້ປະກາດຢ່າງເປັນທາງການ ຕ້ອງໄດ້ກະກຽມແຜນສໍາລັບຂະບວນຍົກຍ້າຍຈັດສັນປະຊາຊົນ. ຈຸດປະສົງຂອງແຜນດັ່ງກ່າວ ແມ່ນເພື່ອອະທິບາຍລະອຽດຂະບວນການມີສ່ວນຮ່ວມທີ່ຕ້ອງໄດ້ເຮັດໃນໄລຍະຈັດຕັ້ງປະຕິບັດໂຄງການຍ່ອຍ ເພື່ອວາງແລະຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບທີ່ບໍ່ດີຍ້ອນການຈໍາກັດໃໝ່ບໍ່ໃຫ້ເຂ□າໄປເອົາຊັບພະຍາກອນ. ຄສລ ຕ້ອງໄດ້ຮັບຮອງເອົາແຜນດັ່ງກ່າວ ກ່ອນຈັດຕັ້ງປະຕິບັດໂຄງການຍ່ອຍ.
- ***ຊົນເຜົ່າ:*** ໂຄງການຍ່ອຍໃດໜຶ່ງອາດສົ່ງຜົນກະທົບຕໍ່ຊົນເຜົ່າ (ໂດຍກໍານົດລັກສະນະຂອງຊົນເຜົ່າ, ຄືກໍານົດໃນນະໂຍບາຍຂອງທະນາຄານໂລກ OP4. 10) ຕ້ອງໄດ້ດໍາເນີນຂະບວນປະເມີນດ້ານສັງຄົມ ຊຶ່ງໃນນີ້ການປຶກສາຫາລືກັບຊົນເຜົ່າ ແບບບໍ່ໄດ້ເສຍຄ່າ, ເຮັດກ່ອນແລະມີຂໍ້ມູນດີ ຈະເຮັດໃຫ້ມີການສະແດງອອກການສະໜັບສະໜູນຂອງຊຸມຊົນຢ່າງກ້ວາງຂວາງ. ການປຶກສາຫາລືດັ່ງກ່າວ ຈະຕ້ອງໄດ້ເຮັດເປັນພາສາເໝາະສົມແລະຢູ່ບ່ອນເໝາະສົມ ເພື່ອໃຫ້ຊົນເຜົ່າໄດ້ເຂ□າຮ່ວມຢ່າງມີຜົນ. ຈາກນັ້ນ, ໂຄງການຍ່ອຍ ຈະຖືກອອກແບບເພື່ອຮັບປະກັນມັນເປັນໂອກາດອັນເໝາະສົມທາງດ້ານວັດທະນະທໍາ ສໍາລັບຊົນເຜົ່າເພື່ອໃຫ້ໄດ້ຮັບຜົນຈາກໂຄງການຍ່ອຍ ລວມທັງວາງມາດຕະການເພື່ອຫຼຸດຜ່ອນຜົນກະທົບທີ່ບໍ່ດີຕໍ່ຊົນເຜົ່າ. ມາດຕະການເຫຼົ່ານີ້ໄດ້ອະທິບາຍລະອຽດໃນແຜນພັດທະນາຊົນເຜົ່າ. ມັນຈໍາເປັນຕ້ອງໃຫ້ ທະນາຄານໂລກ ຮັບຮອງເອົາສາກ່ອນ ຈຶ່ງຈັດຕັ້ງປະຕິບັດໂຄງການຍ່ອຍ. ຊົນເຜົ່າໃນຄວາມໝາຍ

ຂອງ ຄສລ ປະກອບດ້ວຍ: ກຸ່ມເຜົ່າພາສາມອນ-ຂະແມ, ມ□ງ-ອຽນ, ຈີນ-ທິເບດ ແລະໄທ ພູດອຍ ທີ່ມີຄວາມແຕກຕ່າງກັບປະຊາຊົນສ່ວນໃຫຍ່ ລາວທີ່ງພຽງ. ສໍາລັບໂຄງການຍ່ອຍທີ່ມີ ຜົນກະທົບຕໍ່ຊົນເຜົ່າ, ຕ້ອງປະຕິບັດຕາມບົດແນະນໍາໃນເອກກະສານຂັດຕິດ ຄ.

- ***ວຽກກໍ່ສ້າງ:*** ຄສລ ຈະຮັບປະກັນວ່າທຸກໂຄງການຍ່ອຍທີ່ມີວຽກກໍ່ສ້າງຈະປະຕິບັດຕາມລະບຽບ ຂອງລັດຖະບານ ສປປລາວ. ມາດຕະການຫຼຸດຜ່ອນຜົນກະທົບຈະໄດ້ວາງອອກ, ສັງລວມ ເຂ□າໃນບົດແລະຈັດຕັ້ງປະຕິບັດ ສໍາລັບບົດສະເໜີທີ່ວຽກກໍ່ສ້າງຫຼືການປ່ຽນແປງການນໍາໃຊ້ທີ່ ດິນແລະນໍ້າ ທີ່ອາດສົ່ງຜົນກະທົບດ້ານສິ່ງແວດລ້ອມທາງລົບ. ມາດຕະການພື້ນຖານອັນທໍາ ອິດແມ່ນຫຼີກລ້ຽງຫຼືເຮັດໃຫ້ຜົນກະທົບທີ່ບໍ່ດີໜ້ອຍທີ່ສຸດ ໂດຍຊອກຫາແບບໂຄງການຍ່ອຍອື່ນ ແທນ. ກິດຈະກໍາກໍ່ສ້າງຂະໜາດນ້ອຍ ອາດນໍາໃຊ້ວິທີວິສາວະກໍາທີ່ດີ, ການອະນາໄມເຂດ ກໍ່ສ້າງທີ່ດີຫຼືການນໍາໃຊ້ວິທີດໍາເນີນທີ່ໄດ້ມາດຕະຖານ ຄືດັ່ງກອງທຶນລົບລ້າງຄວາມທຸກຍາກໄດ້ ສ້າງຂຶ້ນມາ. ການກໍ່ສ້າງຂະໜາດກາງຫຼືກິດຈະກໍາໃດໜຶ່ງ ທີ່ຄາດວ່າຈະມີຜົນກະທົບດ້ານສິ່ງ ແວດລ້ອມຕໍ່ທ້ອງຖິ່ນໃນລະດັບປານກາງ ຕ້ອງໄດ້ສ້າງແຜນຫຼຸດຜ່ອນຜົນກະທົບດ້ານສິ່ງແວດ ລ້ອມຂອງໂຄງ ການຍ່ອຍ. ເອກກະສານຂັດຕິດ ງ ມີທິດທາງກ່ຽວກັບການຫຼຸດຜ່ອນຜົນ ກະທົບດ້ານສິ່ງແວດລ້ອມ.

9. ຕາຕະລາງ 1 ແລະ ຮູບ 1 ລຸ່ມນີ້ ເປັນທິດທາງກ່ຽວກັບຂະບວນການແລະວຽກກວດມາດຕະການ ດ້ານສິ່ງແວດລ້ອມແລະສັງຄົມ.

ຕາຕະລາງ 1. ທິດທາງກ່ຽວກັບບັນຫາແລະວຽກທີ່ຕິດພັນກັບມາດຕະການສິ່ງແວດລ້ອມແລະສັງຄົມ

| ຜົນກະທົບທີ່ບໍ່ດີທີ່ອາດເກີດຂຶ້ນ | ວຽກຫຼຸດຜ່ອນທີ່ຕ້ອງເຮັດ | ໝາຍເຫດ |
|---|---|---|
| 1) ການສູນເສຍທີ່ດິນແລະຊັບພະຍາກອນແບບຊົ່ວຄາວຫຼືຖາວອນສໍາລັບຄອບຄົວໃດໜຶ່ງ ລວມທັງ ການຈໍາກັດບໍ່ໃຫ້ເຂ□າເຖິງຊັບພະຍາ ກອນທໍາມະຊາດແລະການຕັນທາງໄປມາຂອງຄົນແລະສັດ (ລວມທັງການລາດຕະເວນ). | ຊອກຮູ້ຈໍານວນແລະລັກສະນະຂອງທີ່ດິນທີ່ຕ້ອງການ, ເຈ□າຂອງແລະບັນຫາອື່ນໆແລະກະກຽມແຜນດໍາເນີນງານ ເພື່ອທົດແທນຄ່າເສຍຫາຍຫຼືໃຫ້ການສະໜັບສະໜູນຕາມນະໂຍບາຍຍົກຍ້າຍຈັດສັນປະຊາຊົນທີ່ສ້າງຂຶ້ນ ໃນເອກກະສານຂັດຕິດ 2. | ປຶກສາຫາລືກ່ອນກັບທະນາຄານໂລກ, ສ້າງເອກກະສານໃຫ້ຄົບແລະການກວດຄືນ ຫຼັງຈາກຈັດຕັ້ງປະຕິບັດແລ້ວ ຈາກທະນາຄານໂລກ ເຫັນມີຄວາມຈໍາເປັນ. |
| 2) ຂໍ້ຂັດແຍ່ງທາງດ້ານສັງຄົມທີ່ອາດຈະເກີດຂຶ້ນຈາກກໍາມະສິດຕໍ່ທີ່ດິນແລະການນໍາໃຊ້ທີ່ດິນຫຼືສິດໃນການສະໜອງນໍ້າຫຼືຂໍ້ຂັດແຍ່ງທາງດ້ານສັງຄົມທີ່ກ່ຽວຂ້ອງ. | ວາງມາດຕະການຫຼຸດຜ່ອນຜົນກະທົບເພື່ອແກ້ໄຂຂໍ້ຂັດແຍ່ງໂດຍປຶກສາຫາລືກັບຜູ້ມີສ່ວນຮ່ວມ. | ຖ້າຂໍ້ຂັດແຍ່ງຫາກເຮັດໃຫ້ຊີວິດການເປັນຢູ່ຫຼືການທໍາມາຫາກິນຂອງແມ່ຍິງຫຼືຄອບຄົວທີ່ທຸກຍາກຫຼາຍໃນເຂດໂຄງການຍ່ອຍຫຍຸ້ງຍາກຂຶ້ນຫຼືມີອິດທິພົນທາງດ້ານການເມືອງຫຼືອາດກາຍເປັນບັນຫາຫຼາຍ |

| ຜົນກະທົບທີ່ບໍ່ດີທີ່ອາດເກີດຂຶ້ນ | ວຽກຫຼຸດຜ່ອນທີ່ຕ້ອງເຮັດ | ໝາຍເຫດ |
|---|---|---|
| | | ຂຶ້ນ, ຕ້ອງແຈ້ງໃຫ້ທະນາຄານໂລກ. |
| 3) ອາດສົ່ງຜົນກະທົບຕໍ່ຊົນເຜົ່າ | ດຳເນີນຂະບວນປະເມີນດ້ານສັງຄົມ ຈາກການປຶກສາຫາລືກັບຊົນເຜົ່າ ແບບບໍ່ໄດ້ເສຍຄ່າ, ເຮັດກ່ອນແລະ ມີຂໍ້ມູນດີ, ຖ້າຈຳເປັນ, ສ້າງແຜນ ພັດທະນາຊົນເຜົ່າ ຕາມບົດ ແນະນຳໃນເອກກະສານຂັດຕິດ ຄ. | ປຶກສາຫາລືກ່ອນກັບທະນາຄານ ໂລກ, ສ້າງເອກກະສານໃຫ້ ຄົບແລະການກວດຄືນ ຫຼັງຈາກຈັດ ຕັ້ງປະຕິບັດແລ້ວ ຈາກທະນາຄານ ໂລກ ເຫັນມີຄວາມຈຳເປັນ. |
| 4) ກິດຈະກຳໃນປ່າສະຫງວນ, ເຂດຂະຫຍາຍພັນສັດ, ເຂດກັນຊົນ, ທີ່ດິນບໍລິເວນ ນ້ຳຫຼືເຂດ ອະນຸລັກອື່ນໆ ຫຼືກິດຈະກຳທີ່ມີການກໍ່ສ້າງ ທີ່ອາດເຮັດ ໃຫ້ມີມົນລະພິດ ທາງອາກາດ, ສຽງດັງ ແລະ ນ້ຳເປື້ອນຫຼາຍ, ການເສາະ ໄຫຼຂອງດິນ, ການສ້າງໃຫ້ ມີຄວາມສ່ຽງ ທາງດ້ານ ສຸກຂະພາບ, ການລ່າສັດ ປ່າຫຼືຜົນກະທົບ ຕໍ່ການນຳໃຊ້ ສາຍນ້ຳຢູ່ຕອນລຸ່ມ. | • ສ້າງແຜນຄຸ້ມຄອງສິ່ງແວດ ລ້ອມ ເພື່ອຫຼຸດຜ່ອນຜົນ ກະທົບທີ່ອາດບໍ່ດີຫຼືຫຼຸດຜ່ອນ ຄວາມສ່ຽງທາງດ້ານສິ່ງແວດ ລ້ອມແລະສັງຄົມ. ເອກກະ ສານຂັດຕິດ ງ ມີທິດທາງກ່ຽວ ກັບມາດຕະການຫຼຸດຜ່ອນຜົນ ກະທົບຈຳນວນໜຶ່ງ.<br>• ດຳເນີນການປຶກສາຫາລືກັບ ອຳນາດການປົກຄອງທ້ອງຖິ່ນ ແລະຊຸມຊົນ. | ປຶກສາຫາລືກ່ອນກັບທະນາຄານ ໂລກ, ສ້າງເອກກະສານໃຫ້ ຄົບແລະການກວດຄືນ ຫຼັງຈາກຈັດ ຕັ້ງປະຕິບັດແລ້ວ ຈາກທະນາຄານ ໂລກ ເຫັນມີຄວາມຈຳເປັນ.<br>ເອກກະສານຈະເກັບໄວ້ໃນແຟ້ມ ເພື່ອທະນາຄານໂລກຈະໄດ້ກວດ ຕື່ມ. |
| 5) ການນຳໃຊ້ປ່າໄມ້ແບບຍືນຍົງ ລວມທັງເຄື່ອງປ່າຂອງດົງຫຼື ການນຳເຂ□າຊະນິດພັນ ຕ່າງປະເທດ. | ປຶກສາຫາລືກັບຊຸມຊົນເພື່ອມີການ ຕົກລົງນຳກັນວ່າຈະນຳໃຊ້ປ່າໄມ້ ແລະເຄື່ອງປ່າຂອງດົງແບບຍືນຍົງ ໄດ້ແນວໃດ. ຖ້າມີການພົວພັນກັບ ຊະນິດພັນໃໝ່ຕ້ອງຮັບປະກັນວ່າ ຊະນິດພັນດັ່ງກ່າວ ມີແລ້ວຢູ່ໃນ ເຂດອ້ອມແອ້ມຫຼືຮູ້ວ່າ ມັນບໍ່ແມ່ນ ຊະນິດ ທີ່ຄຸກຄາມຢູ່ບ່ອນທີ່ດີກັນ. ຖ້າຈຳກັດຊັບພະຍາກອນທຳມະ ຊາດ, ຂໍ້ຂັດແຍ່ງທາງດ້ານສັງຄົມ, ຫຼືຊົນເຜົ່າຄືໄດ້ຍົກຂຶ້ນໃນຂໍ້ 1, 2, | ບໍ່ໃຫ້ມີການຕັດໄມ້, ການເກັບກູ້ຫຼື ປຸງແຕ່ງຜະລິດຕະພັນໄມ້.<br>ຄວນປຶກສາຫາລືກັບຜູ້ຊ່ຽວຊານ ດ້ານມາດຕະການສິ່ງແວດລ້ອມ ແລະສັງຄົມຂອງທະນາຄານໂລກ. |

| ຜົນກະທົບທີ່ບໍ່ດີທີ່ອາດເກີດຂຶ້ນ | ວຽກຫຼຸດຜ່ອນທີ່ຕ້ອງເຮັດ | ໝາຍເຫດ |
|---|---|---|
| | 3, ເຮັດຕາມມາດຕະການຫຼຸດຜ່ອນທີ່ວາງອອກໃນຂໍ້ 1, 2 ແລະ 3. | |
| 6) ກິດຈະກຳທີ່ມີການກໍ່ສ້າງນ້ອຍກໍອາດຈະເຮັດໃຫ້ມີມົນລະພິດທາງອາກາດ, ສຽງດັງ ແລະ ນ້ຳເປື້ອນຫຼາຍ, ການເສາະໄຫຼຂອງດິນ, ການສ້າງໃຫ້ມີຄວາມສ່ຽງ ທາງດ້ານສຸກຂະພາບ, ການລ່າສັດປ່າຫຼືຜົນກະທົບ ຕໍ່ການນຳໃຊ້ສາຍນ້ຳຢູ່ຕອນລຸ່ມ. | ຈະນຳໃຊ້ວິທີວິສາວະກຳທີ່ດີ, ການອະນາໄມເຂດກໍ່ສ້າງທີ່ດີ. ຈະປຶກສາຫາລືກັບປະຊາຊົນທ້ອງຖິ່ນ (ເບິ່ງເອກກະສານຂັດຕິດ ງ) | ຄສລ ຈະຮັບປະກັນວ່າມາດຕະການຫຼຸດຜ່ອນຜົນກະທົບທີ່ເໝາະສົມແມ່ນໄດ້ເອົາເຂ□າໃນສັນຍາແລະຜູ້ທີ່ໄດ້ຮັບທຶນແມ່ນຜູ້ຮັບເໝົາ ຈັດຕັ້ງປະຕິບັດມາດຕະການດັ່ງກ່າວຢ່າງດີ. |

## *ບາດກ້າວທີ 3: ການສ້າງເອກກະສານກ່ຽວກັບການປ້ອງກັນສິ່ງແວດລ້ອມແລະສັງຄົມແລະການເຜີຍແຜ່ຂ່າວສານ*

10. ການສ້າງເອກກະສານ: ຜົນກະທົບທີ່ບໍ່ດີອາດເກີດຂຶ້ນແລະມາດຕະການຫຼຸດຜ່ອນຜົນກະທົບທີ່ໄດ້ວາງອອກແລະຜົນຂອງການກວດມາດຕະການດັ່ງກ່າວ ຈະໄດ້ບັນທຶກໄວ້ (ໃນແບບຟອມ A1, A2, ຫຼື A3) ດັ່ງຕໍ່ໄປນີ້:
    - ແບບຟອມ A1: ຖ້າບົດສະເໜີຈະບໍ່ມີວຽກກໍ່ສ້າງ, ການເວນທີ່ດິນຄືນ, ການຍົກຍ້າຍຈັດສັນປະຊາຊົນຫຼືສ້າງຜົນກະທົບທີ່ບໍ່ດີຕໍ່ຊົນເຜົ່າ, ຖິ່ນອາໄສທຳມະຊາດຫຼືຊັບພະຍາກອນວັດທະນະທຳກາຍຍະພາບ.
    - ແບບຟອມ A2: ຖ້າບົດສະເໜີຈະມີວຽກກໍ່ສ້າງນ້ອຍ ແລະການເວນທີ່ດິນຄືນໜ້ອຍ ຫຼື ອາດສ້າງຜົນກະທົບທີ່ບໍ່ດີຕໍ່ຊົນເຜົ່າ, ຖິ່ນອາໄສທຳມະຊາດຫຼືຊັບພະຍາກອນວັດທະນະທຳກາຍຍະພາບຫຼືບໍ່ກໍອາດສ້າງຜົນກະທົບດ້ານສິ່ງແວດລ້ອມແລະສັງຄົມ ເລັກນ້ອຍ.
    - ແບບຟອມ A3: ຖ້າບົດສະເໜີຈະມີການເວນທີ່ດິນຄືນຫຼາຍ ຫຼື ອາດສ້າງຜົນກະທົບທີ່ບໍ່ດີຕໍ່ຊົນເຜົ່າ, ຖິ່ນອາໄສທຳມະຊາດຫຼືຊັບພະຍາກອນວັດທະນະທຳກາຍຍະພາບ ຫຼືບໍ່ກໍອາດສ້າງຜົນກະທົບດ້ານສິ່ງແວດລ້ອມແລະສັງຄົມ ຫຼາຍ.
11. ການເຜີຍແຜ່ຂ່າວສານ: ຂ່າວສານກ່ຽວກັບໂຄງການຍ່ອຍ ທີ່ໄດ້ຮັບຮອງເອົາແລະມາດຕະການຫຼຸດຜ່ອນ ຜົນກະທົບດ້ານສັງຄົມແລະສິ່ງແວດລ້ອມ, ລວມທັງແຜນຫຼຸດຜ່ອນຜົນກະທົບ, ຈະໄດ້ຈັດໄວ້ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂ□າເຖິງໄດ້.

## *ບາດກ້າວທີ 4: ການຢັ້ງຢືນແລະຈັດຕັ້ງປະຕິບັດມາດຕະການປ້ອງກັນ*

12. ຜົນຂອງບາດກ້າວທີ 2 ພ້ອມທັງມີເອກກະສານທີ່ເໝາະ ຈະໄດ້ຮັບການກວດຄືນແລະຢັ້ງຢືນໂດຍຜູ້ຊ່ຽວຊານກ່ຽວກັບການມາດຕະການປ້ອງກັນຂອງ ໜຄຄ ແລະທະນາຄານໂລກ ຕາມຄວາມເໝາະສົມ (ຕາຕະລາງ 1). ໜຄຄ ຈະເຊີນ ອຊນສ, ແນວລາວສ້າງຊາດຫຼືອົງການອື່ນໆມາໃຫ້ຄຳເຫັນກ່ຽວກັບມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມດັ່ງກ່າວ ໃນໄລຍະດຳເນີນການກວດມາດຕະການດັ່ງກ່າວ. ຜົນຂອງການກວດດັ່ງກ່າວຫຼືການຫຼຸດຜ່ອນຜົນກະທົບ ຈະໄດ້ເອົາເຂ□າໃນບາດກ້າວຕໍ່ໄປຂອງຂະບວນການກວດບົດສະເໜີໂຄງການຍ່ອຍ. ຖ້າເຫັນວ່າຮັບບໍ່ໄດ້, ບົດສະເໜີກໍຈະຕົກໄປ. ເອກກະສານກ່ຽວກັບມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ, ເອກກະສານກ່ຽວກັບການກວດມາດຕະການດັ່ງກ່າວແລະອື່ນໆ ຈະໄດ້ເກັບໄວ້ໃນແຟ້ມຂອງໂຄງການຍ່ອຍເພື່ອມ້ຽນໄວ້ໃຫ້ທະນາຄານໂລກກວດເບິ່ງຄືນ. ໜຄຄ ຈະຮັບປະກັນວ່າແຜນທີ່ໄດ້ຕົກລົງມາ ຈະເອົາເຂ□າໃນໂຄງການຍ່ອຍແລະຜູ້ຂໍທຶນເຂ□າໃຈແລະຕັດສິນໃຈຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນດັ່ງກ່າວ.

### ບາດກ້າວທີ 5: ການຊີ້ນຳ, ການຕິດຕາມກວດກາແລະລາຍງານ

13. ໜຄຄ ຈະຊີ້ນຳເປັນແຕ່ລະໄລຍະແລະຕິດຕາມກວດກາ ເບິ່ງຜົນງານການຈັດຕັ້ງປະຕິບັດມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ ແລະ ເອົາຜົນເຂ□າໃນບົດລາຍງານຄວາມຄືບໜ້າຂອງໂຄງການຍ່ອຍ. ທະນາຄານໂລກຈະເຮັດການຊີ້ນຳ, ຕິດຕາມກວດກາແລະກວດຄືນມາດຕະການປ້ອງກັນດັ່ງກ່າວ.

ຮູບ 1 - ຂະບວນການພິຈາລະນາມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ


ຊອກຮູ້ແລະກວດຕາມບັນຊີບັນຫາທີ່ເປັນລົບ ຂອງ ຄສລ
ຜ່ານ
ບໍ່ຜ່ານ
ຊອກຮູ້ຜົນກະທົບທີ່ອາດເກີດ
ແຍກອອກບົດສະເໜີໂຄງການ
ບໍ່ມີຜົນກະທົບ: ຕື່ມ ແບບຟອມ A1 nnex
ຜົນກະທົບໜ້ອຍ/ປານກາງ
ຜົນກະທົບຫຼາຍ
ກວດມາດຕະການຫຼຸດຜ່ອນຜົນ ກະທົບ (ວິທີການທີ່ດີ ແລະການ ປຶກສາຫາລື) ຕື່ມແບບຟອມ A2
ສ້າງກົນໄກກະກຽມມາດຕະການ ປ້ອງກັນກັບຜູ້ຂໍທຶນຫຼືທະນາຄານ ໂລກຕາມຈຳເປັນ
ຖ້າບໍ່ເໝາະ: ສົ່ງຄືນຫາຜູ້ຂໍທຶນ ເພື່ອແປງຈົນ ເໝາະສົມ
ຖ້າເໝາະ: ເລີ້ມຮ່າງບົດສະ ເໜີໂຄງການຍ່ອຍ
ສ້າງົບດລາຍງານມາດຕະການປ້ອງກັນ ຕາມລະບຸບແລະຕື່ມແບບຟອມ A3
ຮັບການເຫັນດີ ຈາກທະນາຄານ
ຂັດຕິດບັນຊີກວດມາດຕະການປ້ອງກັນຫຼືເອກກະສານມາດຕະການປ້ອງກັນໃສ່ໂຄງການຍ່ອຍ
ຈັດຕັ້ງໂຄງການຍ່ອຍແລະປະຕິບັດຕາມລະບຸບມາດຕະການ

## IV. ກົນໄກການຈັດຕັ້ງ

ກປສ ເປັນຜູ້ຮັບຜິດຊອບ ໃຫ້ປະຕິບັດຕາມນະໂຍບາຍສິ່ງແວດລ້ອມແລະສັງຄົມ. ທຸກໂຄງການຍ່ອຍ ຈະໄດ້ກວດຕາມບັນທັດຖານຂອງການກວດດ້ານນະໂຍບາຍສິ່ງແວດລ້ອມແລະສັງຄົມ (ຕາຕະລາງ 1 ແລະ ຮູບ 1) ແລະ ຜົນທີ່ອອກມາ ກໍຈະໄດ້ເຮັດເປັນເອກະສານ ໂດຍນຳໃຊ້ແບບຟອມ (A1, A2 ຫຼື A3) ທີ່ໄດ້ມີໃນເອກະສານຊ້ອນທ້າຍ ກ ການກວດຜ່ານດ້ານນະໂຍບາຍສິ່ງແວດລ້ອມແລະສັງຄົມ ຄວນເຮັດແລ້ວກ່ອນ ສະເໜີໃຫ້ຄະນະກຳມະການຕີລາຄາໂຄງການຍ່ອຍແລະຄະນະກວດກາພາຍນອກ (peer reviewer) (ຖ້າຈຳເປັນ). ເອກະສານທີ່ເຮັດຕາມນະໂຍບາຍດັ່ງກ່າວ ເຊັ່ນການປະເມີນດ້ານສັງຄົມ, ແຜນຍົກຍ້າຍຈັດສັນປະຊາຊົນ, ທິດທາງກ່ຽວກັບຂະບວນການຍົກຍ້າຍປະຊາຊົນ, ຫຼື ການຕີລາຄາແລະແຜນຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ຕ້ອງເຮັດໃຫ້ແລ້ວກ່ອນຈະຮັບຮອງເອົາໂຄງການຍ່ອຍ. ການກວດຜ່ານ ຄວນດຳເນີນໂດຍຜ່ານການປຶກສາຫາລືຢ່າງໃກ້ສິດກັບຜູ້ຂໍທຶນ ຈຶ່ງສາມາດເຮັດຂໍ້ຕົກລົງກ່ຽວກັບບາດກ້າວຕໍ່ໄປແລະ/ຫຼືມາດຕະການຫຼຸດຜ່ອນຜົນກະທົບ. ໃນກໍລະນີທີ່ຜູ້ຂໍທຶນບໍ່ມີຄວາມສາມາດແລະທຶນຮອນພໍ ເພື່ອສ້າງແຜນແລະເອກະສານທີ່ຈຳເປັນໃຫ້ແລ້ວ, ຜູ້ຂໍທຶນອາດຂໍທຶນຂະໜາດນ້ອຍ ເພື່ອປະຕິບັດມາດຕະການຫຼຸດຜ່ອນຜົນກະທົບທີ່ຈຳເປັນ. ຕາຕະລາງ 2 ສະຫຼຸບຄວາມຮັບຜິດຊອບຂອງແຕ່ລະພາກສ່ວນຕ□ນຕໍ.

ຕາຕະລາງ 2

| ຜູ້ຮັບຜິດຊອບ | ຄວາມຮັບຜິດຊອບ |
|---|---|
| ຜູ້ຂໍທຶນ (ຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍ) | ໄລຍະກະກຽມ:<br>- ອ່ານເອກະສານນະໂຍບາຍດັ່ງກ່າວ;<br>- ຮັບປະກັນວ່າ ບໍ່ມີກິດຈະກຳທີ່ຫ້າມຢູ່ໃນບົດສະເໜີ (ເບິ່ງບັນຊີ ກິດຈະກຳທີ່ບໍ່ດີ)<br>- ຊອກຮູ້ຜົນກະທົບທີ່ອາດເກີດຂຶ້ນແລະກະກຽມມາດຕະການຫຼຸດຜ່ອນທີ່ເໝາະສົມ ແລະເອກະສານແລະແຜນທີ່ຕ້ອງເຮັດ, ເຊັ່ນວິທີວິສາວະກຳແລະບົວລະບັດເຮືອນທີ່ດີ, ແຜນຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ, ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ, ນະໂຍບາຍຍົກຍ້າຍຈັດສັນປະຊາຊົນ, ການປະເມີນຜົນດ້ານສັງຄົມ, ແຜນພັດທະນາຊົນເຜົ່າ ຕາມຄວາມຈຳເປັນ. ດີແທ້ຄວນປຶກສາຫາລືກັບ ຄສລ, ກປສ. ແຜນການແລະມາດຕະການທີ່ສະເໜີມາ ຄວນເອົາມາປຶກສາຫາລືກັບປະຊາຊົນທີ່ໄດ້ຮັບຜົນກະທົບ (ທາງລົບແລະທາງບວກ).<br>- ເຜີຍແຜ່ເນື້ອໃນຂອງນະໂຍບາຍສິ່ງແວດລ້ອມແລະສັງຄົມ ແບບເໝາະສົມກັບຕົວຈິງ. |
| | ໄລຍະຈັດຕັ້ງປະຕິບັດ:<br>- ຈັດຕັ້ງປະຕິບັດມາດຕະການທີ່ໄດ້ຕົກລົງເຫັນດີນຳກັນມາ ຄືດັ່ງກຳນົດໃນ |

| ຜູ້ຮັບຜິດຊອບ | ຄວາມຮັບຜິດຊອບ |
|---|---|
| | ໂຄງການຍ່ອຍແລະສະເໜີບົດລາຍງານຄວາມຄືບໜ້າໃຫ້ ຄສລ ເປັນແຕ່ລະໄລຍະ. ເອກກະສານ ດັ່ງກ່າວ ຄວນເກັບໃນແຟ້ມເອກກະສານເພື່ອວ່າທະນາຄານໂລກຈະໄດ້ກວດຄືນ. |
| ຄສລ (ສຳລັບບົດສະເໜີຈາກແຂວງ, ຂັ້ນຕອນລະຫວ່າງຜ/ອຢູ່ແຂວງ ແລະຫ້ອງການວຽງຈັນຕ້ອງໄດ້ສ້າງຂຶ້ນ) | - ການກວດຜ່ານບົດສະເໜີໂຄງການຍ່ອຍທັງໝົດ ເພື່ອໃຫ້ຖືກກັບນໂຍບາຍດັ່ງກ່າວ<br>- ບັນທຶກທຸກບົດສະເໜີແລະຄຳເຫັນໃນການກວດດັ່ງກ່າວ<br>- ຍົກໃຫ້ເຫັນບັນຫາທີ່ຂັດກັບນະໂຍບາຍແລະສະເໜີວິທີການແກ້ໄຂ, ຖ້າມີ, ອີງໃສ່ການປຶກສາຫາລືກັບຜູ້ຂໍທຶນແລະປະຊາຊົນທີ່ໄດ້ຮັບຜົນກະທົບ<br>- ຖ້າຈຳເປັນ, ໃນເວລາດຳເນີນການກວດຜ່ານ ດ້ານນະໂຍບາຍ ໄປເບິ່ງຕົວຈິງໂຄງການຍ່ອຍເຫຼົ່ານັ້ນ ຂັດກັບນະໂຍບາຍແນວໃດ ເພື່ອພິສູດລັກສະນະກາຍະພາບຂອງໂຄງການຍ່ອຍກັບຜົນກະທົບດ້ານສິ່ງແວດລ້ອມແລະ/ຫຼືເພື່ອຢັ້ງຢືນຂະບວນການປຶກສາຫາລືກັບປະຊາຊົນທີ່ໄດ້ຮັຍຜົນກະທົບ<br>- ແກ້ໄຂບັນຫາກ່ຽວກັບນະໂຍບາຍ<br>- ອຳນວຍຄວາມສະດວກໃຫ້ມີການຕົກລົງນຳກັນລະຫວ່າງຊຸມຊົນແລະຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍກ່ຽວກັບມາດຕະການຫຼຸດຜ່ອນຜົນກະທົບດ້ານນະໂຍບາຍ<br>- ຊ່ວຍໄທບ້ານໃນການເຮັດບົດລາຍງານກ່ຽວກັບມາດຕະການຫຼຸດຜ່ອນ ເຊັ່ນບົດລາຍງານກ່ຽວກັບ ການເວນຄືນທີ່ດິນ ແລະ ບົດລາຍງານ ການຍົກຍ້າຍຈັດສັນປະຊາຊົນ<br>- ດູແລການຈັດຕັ້ງປະຕິບັດແຜນຄຸ້ມຄອງສິ່ງແວດລ້ອມແລະມາດຕະການອື່ນໆ; ອາດໃຫ້ການຊ່ວຍເຫຼືອດ້ານເຕັກນິກສະເພາະ<br>- ລົງກວດກາໃນພາກສະໜາມ ໂຄງການທີ່ຕ້ອງການລະບຽບດຳເນີນງານທີ່ມີມາດຕະຖານ ໃນໄລຍະທົບທວນໂຄງການຍ່ອຍໄລຍະກາງແລະເວລາຈົບໂຄງການຍ່ອຍ |
| ທະນາຄານໂລກ | - ກວດແລະຮັບຮອງເອກກະສານຕ່າງໆກ່ຽວກັບນະໂຍບາຍດັ່ງກ່າວ, ຕາມຄວາມຈຳເປັນ |

ເອກກະສານຂັດຕິດ ກ: ແບບຟອມກວດມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ (A1, A2, A3)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສຳນັກງານນາຍົກລັດຖະມົນຕີ** — **ເລກທີ ຄສລ :** ___________

**ກອງທຶນປົກປັກຮັກສາສິ່ງແວດລ້ອມ** — **ເລກທີ ທ້ອງຖິ່ນ :** ___________

## *ແບບຟອມກວດມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ A1 (SF09)*

| | | |
|---|---|---|
| **ຜູ້ຮ້ອງຂໍ:** | **ຊື່ຄຳຮ້ອງ:** | **ເລກທີຄຳຮ້ອງ:** |
| **ປະເພດການຊ່ວຍເຫຼືອ:**<br>ກອງທຶນຍ່ອຍ ຊີວະນາໆພັນ ☐<br>ກອງທຶນຍ່ອຍ ນະໂຍບາຍ ☐ | | **ຈຳນວນທີ່ຂໍ:** |
| *ຂ້າພະເຈ□າຢັ້ງຢືນວ່າໂຄງການຍ່ອຍນີ້ ບໍ່ໄດ້ກ່ຽວຂ້ອງກັບກິດຈະກຳໃດໜຶ່ງໃນ 11 ກິດຈະກຳ ທີ່ມີໃນບັນຊີກວດສອບຂອງບາດກ້າວທີ 1 ຂອງມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ. ໂຄງການຍ່ອຍດັ່ງກ່າວນີ້ ຈະບໍ່ສ້າງຜົນກະທົບທີ່ບໍ່ດີທາງສັງຄົມແລະສິ່ງແວດລ້ອມ ແລະຈະບໍ່ແຕະຕ້ອງຊົນເຜົ່າ ດັ່ງນັ້ນຈຶ່ງບໍ່ຈຳເປັນກະກຽມແລະຮັບຮອງເອົາມາດຕະການຫຼຸດຜ່ອນ.*<br><br>**ກວດຜ່ານໂດຍ:** | | **ວັນທີ:** |
| ໝາຍເຫດ:<br>1. ອະທິບາຍຈຸດປະສົງ, ຂອບເຂດແລະສະຖານທີ່ຂອງໂຄງການຍ່ອຍ | | |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສຳນັກງານນາຍົກລັດຖະມົນຕີ** **ເລກທີ ຄສລ :** ____________

**ກອງທຶນປົກປັກຮັກສາສິ່ງແວດລ້ອມ** **ເລກທີ ຫ້ອງຖິ່ນ :** ____________

## *ແບບຟອມກວດມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ A2 (SF09)*

<table>
<tr><td>ຜູ້ຮ້ອງຂໍ:</td><td>ຊື່ຄຳຮ້ອງ:</td><td>ເລກທີຄຳຮ້ອງ:</td></tr>
<tr><td colspan="2">ປະເພດການຊ່ວຍເຫຼືອ:<br>ກອງທຶນຍ່ອຍ ຊີວະນາໆພັນ ☐<br>ກອງທຶນຍ່ອຍ ນະໂຍບາຍ ☐</td><td>ຈຳນວນທີ່ຂໍ:</td></tr>
<tr><td colspan="2">ຂ້າພະເຈ□າຢັ້ງຢືນວ່າໂຄງການຍ່ອຍນີ້ ບໍ່ໄດ້ກ່ຽວຂ້ອງກັບກິດຈະກຳໃດໜຶ່ງໃນ 11 ກິດຈະກຳ ທີ່ມີໃນບັນຊີກວດສອບຂອງບາດກ້າວທີ 1 ຂອງມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ. ໂຄງການຍ່ອຍດັ່ງກ່າວນີ້ ຈະບໍ່ແຕະຕ້ອງຊົນເຜົ່າ. ຖ້າໂຄງການຍ່ອຍພົວພັນກັບການເວນທີ່ດິນຄືນໃນຂະໜາດນ້ອຍ, ຕ້ອງໄດ້ເຮັດແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ (ຕາມທີ່ໄດ້ອະທິບາຍໃນເອກກະສານຂັດຕິດ ຂ). ຖເມີຜົນກະທົບທີ່ບໍ່ດີທາງດ້ານສິ່ງແວດລ້ອມແລະສັງຄົມເລັກນ້ອຍອື່ນໆ, ຕ້ອງໄດ້ເອົາວິທີວິສາວະກຳແລະການອະນາໄມເຂດກໍ່ສ້າງທີ່ດີເຂ□າໃນແບບຂອງໂຄງການ ເພື່ອຫຼຸດຜ່ອນຫຼືຫຼີກລ້ຽງຜົນກະທົບດັ່ງກ່າວ. ລາຍລະອຽດຂອງຜົນກະທົບທີ່ອາດເກີດຂຶ້ນແລະມາດຕະການຫຼຸດຜ່ອນແມ່ນມີດັ່ງລຸ່ມນີ້.<br><br>ກວດຜ່ານໂດຍ:</td><td>ວັນທີ:</td></tr>
<tr><td colspan="3">ໝາຍເຫດ:<br>1. ອະທິບາຍໂດຍຫຍໍ້ ຈຸດປະສົງ, ຂອບເຂດແລະສະຖານທີ່ຂອງໂຄງການຍ່ອຍ<br>2. ອະທິບາຍໂດຍຫຍໍ້ ມາດຕະການຫຼຸດຜ່ອນຜົນກະທົບ</td></tr>
</table>

| ຄຳຖາມກວດຜ່ານ | ບໍ່ແມ່ນ | ບໍ່ຮູ້ | ແມ່ນ | ມາຕະການຫຼຸດຜ່ອນຜົນກະທົບທີ່ຕ້ອງມີ? |
|---|---|---|---|---|
| I. **ບັນຫາສັງຄົມ** | | | | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ກ, ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |
| • | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |
| • ມີຂໍ້ຂັດແຍ່ງທາງດ້ານສັງຄົມທີ່ອາດເກີດຂຶ້ນບໍ? | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |
| • ອາດພົວພັນກັບຊົນເຜົ່າ | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |
| II. **ບັນຫາສິ່ງແວດລ້ອມ** | | | | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ງ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ມີວຽກກສ້າງນ້ອຍແລະຕ້ອງການມີຜູ້ຮັບເໝົາ | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |
| • | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |
| • | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |
| • | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |
| • | ☐ | ☐ | ☐ | ອະທິບາຍໂດຍຫຍໍ້ມາດຕະການຫຼຸດຜ່ອນຜົນກະທົບ |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສຳນັກງານນາຍົກລັດຖະມົນຕີ** — **ເລກທີ ຄສລ :** ____________

**ກອງທຶນປົກປັກຮັກສາສິ່ງແວດລ້ອມ** — **ເລກທີ ທ້ອງຖິ່ນ :** ____________

## *ແບບຟອມກວດມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ A3 (SF09)*

| | | |
|---|---|---|
| **ຜູ້ຮ້ອງຂໍ:** | **ຊື່ຄຳຮ້ອງ:** | **ເລກທີຄຳຮ້ອງ:** |
| **ປະເພດການຊ່ວຍເຫຼືອ:**<br>ກອງທຶນຍ່ອຍ ຊີວະນາໆພັນ ☐<br>ກອງທຶນຍ່ອຍ ນະໂຍບາຍ ☐ | | **ຈຳນວນທີ່ຂໍ:** |
| *ຂ້າພະເຈ☐າຢັ້ງຢືນວ່າໂຄງການຍ່ອຍນີ້ ບໍ່ໄດ້ກ່ຽວຂ້ອງກັບກິດຈະກຳໃດໜຶ່ງໃນ 11 ກິດຈະກຳທີ່ມີໃນບັນຊີກວດຂອງບາດກ້າວທີ 1 ຂອງມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ.*<br><br>**ກວດຜ່ານໂດຍ:** | | |
| **ຕ້ອງມີມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ:**<br>☐<br>*(ເຮັດບັນຊີແລະອະທິບາຍໂດຍຫຍໍ້ແຜນຫຼຸດຜ່ອນຜົນກະທົບ)* | | **ວັນທີ:** |
| ຄຳເຫັນແນະນຳ ເພື່ອປັບປຸງບົດສະເໜີໂຄງການ ກ່ອນສະເໜີໃຫ້ຄະນະກວດກາຈາກພາຍນອກ ຫຼື ຄະນະກຳມະການຕີລາຄາໂຄງການຍ່ອຍ:<br><br>ກະກຽມຮ່ວມກັບສະມາຊິກຂອງຊຸມຊົນ/ອົງການຮ່ວມງານ<br><br>ໝາຍເຫດ: | | |

| ຄຳຖາມກວດຜ່ານ ກິດຈະກຳແລະງົບປະມານທີ່ສະເໜີມາ ມີອັນຕໍ່ໄປນີ້ບໍ | ບໍ່ແມ່ນ | ບໍ່ຮູ້ | ແມ່ນ | ມາຕະການຫຼຸດຜ່ອນຜົນກະທົບທີ່ຕ້ອງມີ? |
|---|---|---|---|---|
| I. **ບັນຫາສັງຄົມ** | | | | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ມີຜົນກະທົບຕໍ່ຊົນເຜົ່າບໍ | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ມີຂໍ້ຂັດແຍ່ງໃນສິດໃຊ້ນ້ຳແລະຂໍ້ຂັດແຍ່ງທາງດ້ານສັງຄົມທີ່ຕາມມາ ບໍ? | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ຕັດທາງເດີນຂອງຄົນແລະສັດບໍ? | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ມີຂໍ້ຂັດແຍ່ງທາງດ້ານສັງຄົມທີ່ອາດເກີດຂຶ້ນຈາກການຄອບຄອງທີ່ດິນແລະການນຳໃຊ້ທີ່ດິນ ບໍ? | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ອື່ນໆ | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| II. **ຜົນກະທົບດ້ານສິ່ງແວດລ້ອມທີ່ອາດເກີດຂຶ້ນ** <br> ໂຄງການຍ່ອຍ ຈະກໍ່: | | | | |
| • ມີວຽກກສ້າງນ້ອຍແລະຕ້ອງການມີຜູ້ຮັບເໝົາ | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ |

| ຄຳຖາມກວດຜ່ານ<br>ກິດຈະກຳແລະງົບປະມານທີ່ສະເໜີມາ<br>ມີອັນຕໍ່ໄປນີ້ບໍ | ບໍ່ແມ່ນ | ບໍ່ຮູ້ | ແມ່ນ | ມາດຕະການຫຼຸດຜ່ອນຜົນກະທົບທີ່ຕ້ອງມີ? |
|---|---|---|---|---|
| | | | | 1 ແລະເອກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ສຽງແລະຂີ້ຝຸ່ນຈາກເຄື່ອງຈັກກໍ່ສ້າງ ບໍ? | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ມີຄວາມສ່ຽງທີ່ຈະມີດິນຖືກເສາະໄຫຼ? | ☐ | ☐ | ☐ | ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ |
| • ມີມົນລະພິດໃດໜຶ່ງແລະຄວາມສ່ຽງຕໍ່ສຸກຂະພາບຂອງຄົນບໍ? | ☐ | ☐ | ☐ | **ຖ້າມີ, ເບິ່ງບົດແນະນຳໃນຕາຕະລາງ 1 ແລະເອກະສານຂັດຕິດ ຂ ແລະ ຄ. ຖ້າບໍ່ຮູ້ເກັບຂໍ້ມູນຕື່ມ** |

## III. ຂໍ້ສັງເກດອື່ນໆ

## IV. ສະຫຼຸບແລະຂໍ້ແນະນຳ

## V. ລາຍເຊັນ

ເຈ□າຂອງໂຄງການຍ່ອຍ

ຊື່:
ຕຳແໜ່ງ:
ວັນທີ:

ຜູ້ປະສານງານເລື້ອງມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ

ຊື່:
ຕຳແໜ່ງ:
ວັນທີ:

## *ເອກະສານຊັດຕິດ 2: ນະໂຍບາຍກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ຄສລ ເພີ້ມ ກອດມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມ*

### *I. ພາກສະເໜີ*

1. ເອກກະສານສະບັບນີ້ປະກອບດ້ວຍນະໂຍບາຍເພື່ອເວນທີ່ດິນຄືນ, ການທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນປະຊາຊົນແລະຟື້ນຟູເສດຖະກິດ ຂອງຜູ້ທີ່ຖືກຍົກຍ້າຍ ສໍາລັບ ຄສລ ເພີ້ມ. ລັດຖະບານ ສປປລາວ, ໂດຍສະເພາະ ກປສ ໄດ້ເຫັນດີທີ່ຈະນໍາໃຊ້ມາດຕະການປ້ອງກັນສິ່ງແວດລ້ອມແລະສັງຄົມຂອງທະນາຄານໂລກ ໃນການອອກແບບແລະຈັດຕັ້ງປະຕິບັດໂຄງການດັ່ງກ່າວນີ້ ລວມທັງ ນະໂຍບາຍ OP 4.12: ການຍົກຍ້າຍຈັດສັນປະຊາຊົນແບບບໍ່ສະໝັກໃຈ. ຍ້ອນ ຄສລ ຊອກຮູ້ໂຄງການຍ່ອຍໃນໄລຍະຈັດຕັ້ງປະຕິບັດ, ມັນເປັນໄປໄດ້ທີ່ຮູ້ຄວາມຕ້ອງການໃນການວາງແຜນຍົກຍ້າຍຈັດສັນປະຊາຊົນ ໃນໄລຍະປະເມີນໂຄງການ. ນະໂຍບາຍດັ່ງກ່າວໄດ້ກໍານົດຫຼັກການແລະລະບຽບທີ່ຕ້ອງໄດ້ເຮັດຕາມ ຖ້າຫາກດໍາເນີນກິດຈະກໍາໃນເວລາຈັດຕັ້ງປະຕິບັດ ຄສລ ຫາກພົບເຫັນການເວນທີ່ດິນຄືນ ແລະ ການຈໍາກັດແບບບໍ່ສະໝັກໃຈອື່ນໆ ບໍ່ໃຫ້ເຂ□າເຖິງທີ່ດິນຫຼືຊັບພະຍາ ກອນອື່ນໆ. ໃນກໍລະນີດັ່ງກ່າວ, ນະໂຍບາຍຮຽກຮ້ອງໃຫ້ສ້າງແຜນດໍາເນີນງານຍົກຍ້າຍຈັດສັນປະຊາຊົນສໍາລັບໂຄງການຍ່ອຍທີ່ມີການເວນທີ່ດິນຄືນ (ຫຼື ແຜນສໍາລັບຂະບວນຍົກຍ້າຍຈັດສັນປະຊາຊົນສໍາລັບໂຄງການຍ່ອຍ ທີ່ຈໍາກັດການເຂ□າເຖິງຊັບພະຍາກອນໃນປ່າສະຫງວນ). ແຜນດໍາເນີນງານຍົກຍ້າຍຈັດສັນປະຊາຊົນ ຫຼື ແຜນສໍາລັບຂະບວນຍົກຍ້າຍຈັດສັນປະຊາຊົນ ຈະຮັບປະກັນວ່າຜົນກະທົບໃດໜຶ່ງທີ່ອາດເກີດຂຶ້ນຈະມີໜ້ອຍແລະຜູ້ທີ່ໄດ້ຮັບຜົນກະທົບເຫຼົ່ານີ້ ຈະມີໂອກາດຫຼາຍຢ່າງຈາກການທົດແທນຄ່າເສຍຫາຍແລະການຊ່ວຍເຫຼືອໃນຮູບແບບອື່ນໆ ເພື່ອປັບປຸງຫຼືຢ່າງໜ້ອຍກໍຟື້ນຟູລາຍໄດ້ແລະມາດຕະຖານຊີວິດ.

### *II. ເນື້ອໃນຂອງໂຄງການ*

2. *ຄືໄດ້ອະທິບາຍມາໃນພາກ II ຂອງບົດຕ□ນຕໍຜ່ານມາ, ຈຸດປະສົງຂອງໂຄງການແລະລາຍລະອຽດແມ່ນມີລຸ່ມນີ້:*

   ຈຸດປະສົງການພັດທະນາໂຄງການ ແມ່ນເພື່ອປັບປຸງການຄຸ້ມຄອງບັນຫາສິ່ງແວດລ້ອມແລະສັງຄົມທີ່ຕິດພັນກັບການນໍາໃຊ້ຊັບພະຍາກອນທໍາມະຊາດແບບຍືນຍົງຢູ່ ສປປລາວ. ເພື່ອບັນລຸຈຸດປະສົງດັ່ງກ່າວ, ຄສລ ໃຫ້ການສະໜັບສະໜູນດ້ານການເງິນ ແກ່ອົງການລັດ, ອົງການບໍ່ສັງກັດລັດ, ແລະຊຸມຊົນ ເມື່ອໃຫ້ບູລິມະສິດໃຫ້ແກ່: (i) ການສ້າງຄວາມສາມາດດ້ານນະໂຍບາຍແລະການຈັດຕັ້ງໃຫ້ສາມແຂວງເປ□າໝາຍ (ບໍລິຄໍາໄຊ, ຄໍາມ່ວນແລະສະຫວັນນະເຂດ), (ii) ການຄຸ້ມຄອງ ອ່າງນໍ້າ ແບບປະສົມປະສານ ຢູ່ນໍ້າເທີນນໍ້າກະດິງ; (iii) ສ້າງຄວາມສາມາດດ້ານການຈັດຕັ້ງ ເພື່ອຈັດຕັ້ງປະຕິບັດມາດຕະການດ້ານສິ່ງແວດລ້ອມແລະສັງຄົມ; (iv) ຈັດຕັ້ງປະຕິບັດນະໂຍບາຍ ເພື່ອສົ່ງເສີມການພັດທະນາໄຟຟ້ານໍ້າຕົກແບບຍືນຍົງ; ແລະ (v) ປົກປັກຮັກສາແລະອະນຸລັກຖິ່ນອາໄສທໍາມະຊາດແລະຊີວະນາໆພັນ. ກິດຈະກໍາເຫຼົ່ານີ້ ຈະໄດ້ຮັບທຶນ

ຊ່ວຍເຫຼືອລ້າຕາມກົນໄກໂຄງການຍ່ອຍ ຊຶ່ງທຶນຈະໄຫຼຜ່ານກອງທຶນຍ່ອຍ (ນະໂຍບາຍແລະຊີວະນາໆພັນ) ທີ່ສ້າງຂຶ້ນໃນ ກປສ.

ຄສລ ປະກອບດ້ວຍ 3 ວຽກໃຫຍ່ດັ່ງນີ້:

- ວຽກທີ 1*: **ກອງທຶນຍ່ອຍ "ຈັດຕັ້ງປະຕິບັດນະໂຍບາຍ ແລະ ປັບປຸງຄວາມສາມາດ"**.* ວຽກນີ້ຈະສ້າງຄວາມເຂັ້ມແຂງໃນຂັ້ນສູນກາງ, ແຂວງແລະເມືອງດັ່ງນີ້: (i) ສ້າງແລະຈັດຕັ້ງນະໂຍບາຍສິ່ງແວດລ້ອມແລະສັງຄົມ; (ii) ປະເມີນຜົນດ້ານສິ່ງແວດລ້ອມແລະຕິດຕາມກວດກາປະຕິບັດຕາມຄວາມຮັບຜິດຊອບດ້ານການຈັດຕັ້ງ ໃນການຄຸ້ມຄອງທາງດ້ານສິ່ງແວດລ້ອມ; (iii) ວຽກຄຸ້ມຄອງອ່າງນ້ຳ ແບບປະສົມປະສານ; (iv) ນະໂຍບາຍໄຟຟ້ານ້ຳຕົກແບບຍືນຍົງ; ແລະ (v) ວຽກສຶກສາແລະສ້າງຈິດສຳນຶກດ້ານສິ່ງແວດລ້ອມ.
- ວຽກທີ 2*: **ກອງທຶນຍ່ອຍ "ລົງທຶນແກ່ຊີວະນາໆພັນແລະຊຸມຊົນ"**.* ວຽກນີ້ແນໃສ່ສະໜັບສະໜູນແຜນສ້າງຄວາມເຂັ້ມແຂງໃນວິທີການອະນຸລັກແລະກິດຈະກຳປັບປຸງຊີວິດການເປັນຢູ່ ຢູ່ໃນແລະອ້ອມແອ້ມປ່າສະຫງວນ (ສ້າງຈາກວິທີການວາງແຜນອະນຸລັກ ທີ່ໄດ້ພັດທະນາສຳລັບປ່າສະຫງວນນາກາຍນ້ຳເທີນແລະເຂດເຊື່ອມຕໍ່) ແລະ ປັບປຸງສະພາບສິ່ງແວດລ້ອມຂອງທ້ອງຖິ່ນຈາກກິດຈະກຳຮ່ວມມືກັບຊຸມຊົນ, ອຳນາດການປົກຄອງທ້ອງຖິ່ນ, ອົງການສັງຄົມຢູ່ພາກກາງຂອງ ສປປລາວ;
- ວຽກທີ 3*: "ການສະໜັບສະໜູນການຄຸ້ມຄອງແລະຕິດຕາມກວດກາ".* ວຽກນີ້ ຈະສະໜັບສະໜູນ ກິດຈະກຳດັ່ງຕໍ່ໄປນີ້: ການປະຕິບັດງານຂອງ ກປສ ປະຈຳວັນ, ໂດຍສະເພາະ ກອງທຶນຍ່ອຍນະໂຍບາຍແລະຊີວະນາໆພັນ; ການຕະຫຼາດແລະພັດທະນາທຸລະກິດຂອງກອງທຶນຍ່ອຍ ເພື່ອໃຫ້ຜູ້ທີ່ຈະໄດ້ຜົນປະໂຫຍດຂຽນບົດສະເໜີໂຄງການຍ່ອຍ; ສ້າງແລະຈັດຕັ້ງປະຕິບັດຂະບວນການຕິດຕາມກວດກາ, ຕີລາຄາແລະເຜີຍແຜ່ ເພື່ອປະເມີນຜົນງານຂອງສອງກອງທຶນຍ່ອຍທີ່ກ່າວມານັ້ນ ແລະ ຝຶກອົບຮົມພະນັກງານຂອງ ຄສລ ເພື່ອເຮັດວຽກເຫົ່ານີ້.

ກິດຈະກຳມີປະເພດດັ່ງນີ້ (i) ທຶນສຳລັບການສ້າງຄວາມສາມາດສຳລັບວຽກ 1 ຊຶ່ງລວມເອົາການສຶກສາ, ການສຳຫຼວດ, ກອງປະຊຸມ, ການຝຶກອົບຮົມ, ການສ້າງບົດແນະນຳເຕັກນິກ, ການຕີລາຄາແລະປະເມີນສະພາບສິ່ງແວດລ້ອມ ແລະ ອື່ນໆ; ແລະ (ii) ທຶນຊ່ວຍເຫຼືອການຄຸ້ມຄອງປ່າສະຫງວນແລະສິ່ງແວດລ້ອມຂອງຊຸມຊົນ ແລະກິດຈະກຳປັບປຸງຊີວິດການເປັນຢູ່. ນອກນີ້, ໂຄງການ ຍັງຈະສະໜັບສະໜູນການຊອກຫາຄວາມຊ່ຽວຊານສາກົນ ເພື່ອຈັດຕັ້ງປະຕິບັດບາງວຽກຂອງໂຄງການ.

3. ກິດຈະກຳ ທີ່ອາດມີການເວນທີ່ດິນຄືນຫຼືຈຳກັດການເຂ□າເຖິງຊັບພະຍາກອນ ແມ່ນກິດຈະກຳຂອງໂຄງການຍ່ອຍ ຊີວະນາໆພັນທີ່ຄາດວ່າຈະເຮັດໃນອ່າງແມ່ນ້ຳ ນ້ຳເທີນ-ນ້ຳກະດິງ. ຢ່າງໃດກໍດີ, ເມື່ອຂອບເຂດແລະຈຸດປະສົງຂອງໂຄງການຍ່ອຍເຫຼົ່ານີ້ແນໃສ່ການອະນຸລັກ, ຜົນກະທົບຄາດວ່າຈະເປັນ

ທາງບວກ. ການປຶກສາຫາລືຢ່າງໃກ້ສິດກັບອຳນາດການປົກຄອງແລະປະຊາຊົນໃນທ້ອງຖິ່ນແມ່ນເປັນອັນຕັດສິນ.

## III. ຈຸດປະສົງຂອງນະໂຍບາຍແລະບາງຄຳນິຍາມ

4. ນະໂຍບາຍ OP 4. 12 ໄດ້ທິດທາງຕ□ນຕໍກ່ຽວກັບຈຸດປະສົງແລະຫຼັກການທີ່ສາມາດໃຊ້ໄດ້ກັບການຄຸ້ມຄອງແລະຜົນກະທົບທີ່ມາຈາກການຍົກຍ້າຍຈັດສັນປະຊາຊົນ. ຈຸດປະສົງຕ□ນຕໍແລະຄຳນິຍາມດັ່ງນີ້:

5. ຈະຕ້ອງມີຄວາມພະຍາຍາມຢ່າງສົມເຫດສົມຜົນ ເພື່ອຫຼີກລ້ຽງຫຼືເຮັດໃຫ້ການຄຸ້ມຄອງມີໜ້ອຍທີ່ສຸດ ແລະເຮັດໃຫ້ຜົນກະທົບຈາກການຍົກຍ້າຍຈັດສັນປະຊາຊົນມີໜ້ອຍສຸດ. ຖ້າມີການຄຸ້ມຄອງແລະບໍ່ສາມາດຫຼີກລ້ຽງໄດ້, ຈຸດປະສົງທີ່ເປັນຫຼັກການຂອງແຜນສຳລັບຂະບວນຍົກຍ້າຍຈັດສັນປະຊາຊົນແມ່ນເພື່ອຮັບປະກັນວ່າທຸກຄົນທີ່ໄດ້ຮັບຜົນກະທົບບໍ່ດີ (ຜູ້ທີ່ຖືກຍົກຍ້າຍຄືນິຍາມລຸ່ມນີ້) ຈະຕ້ອງໄດ້ການທົດແທນໃນມູນຄ່າປ່ຽນແທນ (ຄືນິຍາມລຸ່ມນີ້) ສຳລັບທີ່ດິນແລະຊັບສິນອື່ນໆທີ່ສູນເສຍໄປແລະບໍ່ດັ່ງນັ້ນ ກໍໄດ້ຮັບມາດຕະການຟື້ນຟູເສດຖະກິດຫຼືການຊ່ວຍເຫຼືອແບບອື່ນໆທີ່ຈຳເປັນ ເພື່ອໃຫ້ເຂົາເຈ□າ ມີໂອກາດພຽງພໍເພື່ອປັບປຸງຫຼືຢ່າງໜ້ອຍກໍຟື້ນຟູລາຍຮັບແລະມາດຕະຖານຊີວິດຂອງເຂົາເຈ□າ.

6. "ຜູ້ທີ່ຖືກຍົກຍ້າຍ" ໝາຍເຖິງຜູ້ຄົນທີ່ຈະມີ, ອີງໃສ່ກິດຈະກຳທີ່ໄລ່ມາເທິງນັ້ນ, (1) ມາດຕະຖານຊີວິດໄດ້ຮັບຜົນກະທົບທີ່ບໍ່ດີ, ຫຼື (2) ສິດ, ກຳມະສິດ, ຜົນປະໂຫຍດຈາກເຮືອນ, ທີ່ດິນ (ລວມທັງເຮືອນຊານ, ທີ່ດິນກະສິກຳແລະລ້ຽງສັດ) ຫຼືຊັບສົມບັດຄົງທີ່ແລະຍົກຍ້າຍໄດ້ ຖືກເວນຄືນ ຫຼືຄອບຄອງຊົ່ວຄາວຫຼືຖາວອນ; (3) ການເຂ□າເຖິງແຫຼ່ງຜະລິດໄດ້ ຮັບຜົນກະທົບທີ່ບໍ່ດີ, ຊົ່ວຄາວຫຼືຖາວອນ; (4) ທຸລະກິດ, ອາຊີບ, ບ່ອນເຮັດວຽກຫຼືບ່ອນພັກເຊົາຫຼືຖິ່ນອາໄສໄດ້ຮັບຜົນກະທົບບໍ່ດີ.

7. "ມູນຄ່າປ່ຽນແທນ" ແມ່ນວິທີຕີລາຊັບສິນທີ່ກຳນົດຈຳນວນຄ່າທົດແທນຄ່າເສຍຫາຍພຽງພໍເພື່ອປ່ຽນແທນຊັບສິນທີ່ເສຍໄປ ລວມທັງຄ່າລົງທຶນທີ່ຈຳເປັນຕ່າງໆ. ການທົດແທນຄ່າເສຍຫາຍໃນມູນຄ່າປ່ຽນແທນໄດ້ຖືກກຳນົດດັ່ງນີ້: ສຳລັບດິນກະສິກຳ ແມ່ນລາຄາຕາມທ້ອງຕະຫຼາດຊຶ່ງສ່ວນຫຼາຍແມ່ນສູງກ່ວາລາຄາຂອງທີ່ດິນມີສັກຂະຍະພາບຫຼືການນຳໃຊ້ເຂ□າໃນການຜະລິດເທົ່າກັບໃນເຂດໃກ້ຄຽງກັບທີ່ດິນໄດ້ຮັບຜົນກະທົບ ກ່ອນມີໂຄງການຫຼືກ່ອນມີການຍົກຍ້າຍ, ເພີ້ມຄ່າກະກຽມທີ່ດິນໃຫ້ໄດ້ລະດັບດຽວກັບທີ່ດິນທີ່ໄດ້ຮັບຜົນກະທົບ, ຕື່ມຄ່າໂອນແລະຂຶ້ນທະບຽນ. ສຳລັບທີ່ດິນໃນຕົວເມືອງ ແມ່ນລາຄາຕາມທ້ອງຕະຫຼາດຂອງທີ່ດິນທີ່ມີຂະໜາດແລະການນຳໃຊ້ແບບດຽວກັນ ກ່ອນເວລາຍົກຍ້າຍ, ພ້ອມທັງມີສາທາລະອຸປະໂພກແລະການບໍລິການຄືເກົ່າຫຼືດີກ່ວາເກົ່າ ແລະຢູ່ໃນເຂດອ້ອມແອ້ມຂອງທີ່ດິນທີ່ໄດ້ຮັບຜົນກະທົບ, ຕື່ມຄ່າໂອນແລະຂຶ້ນທະບຽນ. ສຳລັບເຮືອນແລະໂຄງລ່າງອື່ນໆ, ມັນກໍແມ່ນລາຄາວັດສະດຸຕາມທ້ອງຕະຫຼາດ ເພື່ອສ້າງໂຄງລ່າງປ່ຽນແທນໃນເຂດແລະຄຸນນະພາບເທົ່າກັບຫຼືດີກ່ວາໂຄງລ່າງທີ່ໄດ້ຮັບຜົນກະທົບ, ຫຼືເພື່ອສ້ອມແປງໂຄງລ່າງທີ່ໄດ້ຮັບຜົນກະທົບສ່ວນໃດສ່ວນໜຶ່ງ, ຕື່ມໃສ່ຄ່າຂົນສົ່ງວັດສະດຸຫາບ່ອນກໍ່ສ້າງ, ຕື່ມຄ່າຄ່າແຮງງານແລະຄ່າກໍ່ສ້າງ, ແລະຕື່ມຄ່າຂຶ້ນທະບຽນແລະໂອນ. ໃນການໄລ່ຄ່າປ່ຽນແທນ ຈະບໍ່ໄລ່ຄ່າຫຼຸ້ຍຫ້ຽນຂອງວັດສະດຸແລະຄ່າວັດຖຸເສຍຫາຍແລະບໍ່ໄລ່ຜົນໄດ້ຈາກໂຄງການ ທີ່ເຮັດໃຫ້ຄ່າຊັບສິນທີ່ໄດ້ຮັບຜົນກະທົບນັ້ນເພີ້ມຂຶ້ນ. ເມື່ອກົດໝາຍພາຍໃນບໍ່ໄດ້ຕາມ

ມາດຕະຖານການຍົກຍ້າຍໃນມູນຄ່າປ່ຽນແທນເຕັມ, ການທົດແທນຄ່າເສຍຫາຍຕາມກົດໝາຍພາຍໃນຈະຕ້ອງມີມາດຕະການເພີ້ມເພື່ອໃຫ້ໄດ້ຕາມມາດຕະຖານຂອງຄ່າປ່ຽນແທນ. ການຊ່ວຍເຫຼືອເພີ້ມດັ່ງກ່າວ ແມ່ນແຍກອອກຈາກມາດຕະການຍົກຍ້າຍທີ່ມີໃນ OP4. 12, ວັກ 6.

"ການເວນທີ່ດິນຄືນ" ແມ່ນຂະບວນທີ່ບຸກຄົນໃດໜຶ່ງໄດ້ສູນເສຍກຳມະສິດ, ການນຳໃຊ້ຫຼືການເຂ□າເຖິງທີ່ດິນແບບບໍ່ສະໝັກໃຈຍ້ອນໂຄງການ. ການເວນທີ່ດິນຄືນອາດເຮັດໃຫ້ມີຜົນກະທົບທີ່ຕາມມາຈຳນວນໜຶ່ງລວມທັງການສູນເສຍເຮືອນຊານແລະຊັບສິນອື່ນໆ (ຮ□ວ, ນ້ຳສ້າງ, ທາດ, ຫຼືໂຄງລ່າງອື່ນໆຫຼືສິ່ງອື່ນໆທີ່ຕິດມາກັບດິນ).

"ການຟື້ນຟູຊີວິດການເປັນຢູ່" ແມ່ນຂະບວນການທີ່ຜູ້ຖືກຍົກຍ້າຍມີໂອກາດພໍເພື່ອຟື້ນຟູຜະລິດຕະພາບ, ລາຍໄດ້ແລະມາດຕະຖານຊີວິດ. ການທົດແທນຄ່າເສຍຫາຍຂອງຊັບສິນສ່ວນຫຼາຍບໍ່ມັກເຮັດໃຫ້ຟື້ນຟູໄດ້ຄົບຖ້ວນ.

"ມື້ຄິດໄລ່" ແມ່ນວັນກ່ອນທີ່ກຳມະສິດຫຼືການນຳໃຊ້ມານັ້ນ ໄດ້ຮັບສິດທີ່ຈະໄດ້ຮັບທົດແທນຄ່າເສຍຫາຍຫຼືການຊ່ວຍເຫຼືອອື່ນໆໃນຖານະຜູ້ທີ່ຖືກຍົກຍ້າຍ. ວັນດັ່ງກ່າວໄດ້ກຳນົດ ໃນແຜນຍົກຍ້າຍຈັດສັນປະຊາຊົນສ່ວນຫຼາຍມັກຖືເອົາມື້ສຳຫຼວດຜູ້ທີ່ໄດ້ຮັບຜົນກະທົບ ຫຼືມື້ທີ່ແຈ້ງໃຫ້ປະຊາຊົນກ່ຽວກັບວຽກກໍ່ສ້າງໃດໜຶ່ງສະເພາະ ທີ່ອາດເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນ. ຜູ້ທີ່ເຂ□າມາໃນເຂດໂຄງການ ຫຼັງມື້ດັ່ງກ່າວບໍ່ມີສິດຈະໄດ້ຮັບການທົດແທນຄ່າເສຍຫາຍແລະການຊ່ວຍເຫຼືອອື່ນໆ.

## *ຫຼັກການສຳຄັນ*

8. ນະໂຍບາຍຂອງທະນາຄານໂລກ OP 4.12 ໄດ້ວາງຫຼັກການສຳຄັນ ທີ່ຕ້ອງໄດ້ປະຕິບັດຕາມໃນການວາງແຜນແລະຈັດຕັ້ງປະຕິບັດແຜນຍົກຍ້າຍຈັດສັນປະຊາຊົນ. ອັນທີ່ພົວພັນກັບ ແຜນສຳລັບຂະບວນຍົກຍ້າຍຈັດສັນປະຊາຊົນ ມີດັ່ງຕໍ່ໄປນີ້:
   - (i) ເມື່ອເປັນໄປໄດ້, ການອອກແບບໂຄງການແລະ ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນຄວນເຮັດຄືກັນແຜນພັດທະນາ, ເພື່ອວ່າຜູ້ທີ່ຖືກຍົກຍ້າຍໄດ້ຮັບຜົນປະໂຫຍດຈາກການບໍລິການແລະສາທາລະອຸປະໂພກທີ່ສ້າງຂຶ້ນໃຫ້ຫຼືຍ້ອນກິດຈະກຳຂອງໂຄງການ.
   - (ii) ຜູ້ທີ່ຖືກຍົກຍ້າຍ ມີສິດໄດ້ຮັບຄ່າທົດແທນຈາກຊັບສິນທີ່ສູນເສຍໄປຫຼືທາງເລືອກອື່ນແຕ່ໃນຮູບແບບຊ່ວຍເຫຼືອເທົ່າທຽມກັນແທນການທົດແທນຄ່າເສຍຫາຍ; ການຂາດກຳມະສິດຕາມກົດໝາຍຕໍ່ຊັບສິນທີ່ເສຍໄປ ຈະບໍ່ຈຳກັດຜູ້ທີ່ຖືກຍົກຍ້າຍບໍ່ໃຫ້ໄດ້ຄ່າທົດແທນຄ່າເສຍຫາຍຫຼືຮູບແບບຊ່ວຍເຫຼືອທີ່ເປັນທາງເລືອກ.
   - (iii) ອັດຕາການທົດແທນຄ່າເສຍຫາຍທີ່ສ້າງຂຶ້ນ ໃນແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນອີງໃສ່ຈຳນວນທີ່ຈະຕ້ອງຈ່າຍຄົບຖ້ວນໃນບຸກຄົນຫຼືເຈ□າຂອງລວມ ສຳລັບຊັບສິນທີ່ສູນເສຍໄປ, ໂດຍບໍ່ຫັກຄ່າຫຼຸ້ຍຫ້ຽນຫຼືຄ່າພາສີ, ທຳນຽມແລະອື່ນໆ.
   - (iv) ເມື່ອເວນທີ່ດິນກະສິກຳ, ຄວນພະຍາຍາມເອົາທີ່ດິນປ່ຽນແທນທີ່ດິນ.
   - (v) ການທົດແທນທີ່ດິນເຮືອນ, ບ່ອນປ່ຽນແທນທຸລະກິດຫຼືປ່ຽນແທນດິນກະສິກຳ ຄວນມີຄ່ານຳໃຊ້ເທົ່າທຽມກັນທີ່ດິນທີ່ສູນເສຍ.

(vi) ໄລຍະຂ້າມຜ່ານຂອງການຈັດຕັ້ງປະຕິບັດ ຄວນເຮັດໃຫ້ມັນສັ້ນ. ການທະນາຄານໂລກຂອງຊັບສິນຄວນຈ່າຍກ່ອນເວລາຜົນກະທົບເກີດຂຶ້ນ, ດັ່ງນັ້ນເຮືອນໃໝ່ສາມາດສ້າງ, ຊັບສິນບັດຄົງທີ່ສາມາດຍົກຍ້າຍຫຼືປ່ຽນແທນແລະມາດຕະການຫຼຸດຜ່ອນອັນຈຳເປັນອື່ນໆ ຄວນດຳເນີນກ່ອນມີການຍົກຍ້າຍຕົວຈິງ.

(vii) **ຜູ້ທີ່ຖືກຍົກຍ້າຍຕ້ອງໄດ້ຮັບການຊ່ວຍເຫຼືອ (ການຊ່ວຍເຫຼືອຫຼືອຸດໜູນໂດຍກົງ) ສຳລັບຄ່າຍົກຍ້າຍຫຼືເງິນອຸດໜູນຊົ່ວຄາວຈົນກ່ວາກິດຈະກຳຜະລິດຈະເປັນໝາກເປັນຜົນ.**

(viii) ຄວນປຶກສາຫາລືກັບຜູ້ທີ່ຖືກຍົກຍ້າຍ ໃນຂະບວນການກະກຽມແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ເພື່ອໃຫ້ເຂົາເຈ□າສະເໜີຄວາມຄິດຄວາມເຫັນກ່ຽວກັບກົນໄກການຍົກຍ້າຍຈັດສັນປະຊາຊົນ ມາໃຫ້ພິຈາລະນາ; ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຈະໄດ້ເຜີຍແຜ່ໃຫ້ມວນຊົນຊາບໃນຮູບແບບທີ່ຜູ້ທີ່ຖືກຍົກຍ້າຍສາມາດເຂ□າເຖິງງ່າຍ.

(ix) ການບໍລິການແລະການເຂ□າເຖິງຊັບພະຍາກອນ ຄວນຮັກສາໃນລະດັບເກົ່າຫຼືປັບປຸງໃຫ້ດີຂຶ້ນ ຫຼັງຈາກຍົກຍ້າຍແລ້ວ.

(x) ຄວາມຮັບຜິດຊອບ ຕ້ອງໄດ້ກຳນົດໃຫ້ຈະແຈ້ງເພື່ອໃຫ້ແທດເໝາະກັບຄ່າທີ່ຕິດພັນກັບການເວນທີ່ດິນຄືນແລະຍົກຍ້າຍແລະຮັບປະກັນວ່າທຶນມີພຽງພໍເມື່ອຢາກໃຊ້.

(xi) ກົນໄກການຈັດຕັ້ງ ຕ້ອງໄດ້ກຳນົດໃຫ້ຈະແຈ້ງເພື່ອຮັບປະກັນວ່າການຈັດຕັ້ງປະຕິບັດມາດຕະການ ຈະຟື້ນຟູຊີວິດການເປັນຢູ່ທັນກັບເວລາຕ້ອງການ.

(xii) ຄວນສ້າງກົນໄກຕິດຕາມກວດກາໃຫ້ດີ ສຳລັບການຈັດຕັ້ງປະຕິບັດທຸກມາດຕະການຈັດຕັ້ງປະຕິບັດ.

(xiii) ວິທີຜູ້ທີ່ຖືກຍົກຍ້າຍຈະສາມາດຮ້ອງທຸກ ຄວນຈະໄດ້ສ້າງຂຶ້ນ ແລະຂ່າວສານກ່ຽວກັບລະບຽບການໄກ່ເກ່ຍ ຈະຕ້ອງບອກໃຫ້ຜູ້ທີ່ຖືກຍົກຍ້າຍຊາບ.

## *IV. ລະບຽບກົດໝາຍຂອງ ສປປລາວ*

9. ລະບຽບກົດໝາຍຂອງ ສປປລາວ ໄດ້ມີການປ່ຽນແປງຢ່າງວ່ອງໄວໃນຊຸມປີຫຼັງນີ້. ລັດຖະທຳມະນູນໄດ້ປະກາດໃຊ້ໃນປີ 1991, ກົດໝາຍປ່າໄມ້ແລະຊັບພະຍາກອນນ້ຳໃນປີ 1966, ກົດໝາຍທີ່ດິນໃນປີ 1997. ກົດໝາຍເຫຼົ່ານີ້ ກຳລັງໄດ້ຮັບການປັບປຸງແລະດັດແກ້. ໃນປີ 20005, ໄດ້ມີການອອກດຳລັດວ່າດ້ວຍການທົດແທນຄ່າເສຍຫາຍແລະຍົກຍ້າຍຈັດສັນປະຊາຊົນ ແລະ ໃນປັດຈຸບັນກຳລັງເຮັດບົດແນະນຳເຕັກນິກ ໃຫ້ແລ້ວ. ດຳລັດດັ່ງກ່າວ ໄດ້ອີງໃສ່ກົດໝາຍແລະດຳລັດດັ່ງຕໍ່ໄປນີ້:

- ລັດຖະທຳມະນູນຂອງ ສປປລາວ
- ກົດໝາຍ ທີ່ດິນ ເລກທີ 01/97 ສປສ, ລົງວັນທີ 12/4/1997
- ກົດໝາຍປ່າໄມ້ ເລກທີ 01/96, ລົງວັນທີ 11/10/1996
- ກົດໝາຍນ້ຳ ແລະຊັບພະຍາກອນ ແຫຼ່ງນ້ຳ ເລກທີ 02/96, ລົງວັນທີ 11/10/1996
- ກົດໝາຍ ການປົກປັກຮັກສາສິ່ງແວດລ້ອມ ເລກທີ 02/99ສປສ, ລົງວັນທີ 3/4/1999
- ກົດໝາຍໄຟຟ້າ ເລກທີ 02/97 ສປສ, ລົງວັນທີ 12/4/1997
- ກົດໝາຍ ທາງຫຼວງ ເລກທີ 04/99ສປສ, ລົງວັນທີ 3/4/1999

- ກົດໝາຍ ບໍ່ແຮ່ (ເດືອນ 4/1997)
- ກົດໝາຍ ຜັງເມືອງ 03/99ສປສ, ລົງວັນທີ 3/4/1999
- ຂໍ້ຕົກລົງ 1266/95 ຂອງ ກຄຂປກ ກ່ຽວກັບການຕີລາຄາພາຫະນະ, ເຮືອນ, ຕຶກແລະສິ່ງອຳນວຍຄວາມສະດວກ ສຳລັບພະນັກງານລັດ

## *IV. ການສ້າງແລະຮັບຮອງເອົາ ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ*

10. ສຳລັບໂຄງການນີ້, ຄວາມຮັບຜິດຊອບໃນການກະກຽມແລະຈັດຕັ້ງປະຕິບັດແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ແມ່ນຂຶ້ນກັບ ຄສລ/ກປສ. ເມື່ອເຮັດໄດ້ ຄສລ/ກປສ ຈະຮ່ວມມືກັບພະນັກງານແຂວງແລະເມືອງ ປະສານກິດຈະກຳຕາມຄວາມຈຳເປັນ ເພື່ອຮັບປະກັນໃຫ້ການວາງແຜນແລະຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນໄດ້ດີແລະທັນເວລາ.

11. ເມື່ອຮູ້ວ່າການເວນທີ່ດິນຄືນແລະຜົນກະທົບທີ່ຕິດພັນມາ ມີຄວາມຈຳເປັນ ເພື່ອເຮັດໃຫ້ກິດຈະກຳຂອງໂຄງການສຳເລັດ ແລະ ເມື່ອບັນທັດຖານກ່ຽວກັບສະຖານທີ່ໄດ້ກຳນົດວ່າຕ້ອງເວນທີ່ດິນຄືນ, ຄວນເລີ້ມວາງແຜນຍົກຍ້າຍຈັດສັນປະຊາຊົນ. ເຈ□າຂອງໂຄງການຍ່ອຍ ຈະໄດ້ເຮັດຫຼືໃຫ້ຜູ້ອື່ນເຮັດການສຳຫຼວດປະຊາກອນເພື່ອຊອກຮູ້ແລະໄລ່ຜູ້ທີ່ຖືກຍົກຍ້າຍທັງໝົດ, ແລະການສຳຫຼວດເສດຖະກິດ-ສັງຄົມເມື່ອຮູ້ຂະໜາດແລະຂອບເຂດຂອງຜົນກະທົບທີ່ບໍ່ດີ ໃນເຂດທີ່ໄດ້ຮັບຜົນກະທົບ. ການສຳຫຼວດປະຊາ ກອນ ຕ້ອງລວມເອົາຜູ້ທີ່ຖືກຍົກຍ້າຍ 100%, ການສຳຫຼວດເສດຖະກິດ-ສັງຄົມເຮັດແບບສຸ່ມເອົາ. ການສຳຫຼວດເຫຼົ່ານີ້ ຊຶ່ງອາດເຮັດແຍກກັນຫຼືພ້ອມກັນ, ຈະກຳນົດວ່າ ຕ້ອງເຮັດແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຄົບຖ້ວນຫຼືຫຍໍ້ (ຕາມທີ່ນະໂຍບາຍ OP4. 12 ກຳນົດໄວ້ໃນເອກກະສານຂັດຕິດ ກ). ເມື່ອຜູ້ທີ່ໄດ້ຮັບຜົນກະທົບໜ້ອຍກ່ວາ 200 ຄົນ, ຈະໄດ້ເຮັດແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນຫຍໍ້. ຜົນກະທົບຖືວ່າມີໜ້ອຍ ຖ້າປະຊາຊົນບໍ່ໄດ້ຖືກຍົກຍ້າຍຕົວຈິງແລະຊັບສິນສຳລັບການຜະລິດ ໄດ້ສູນເສຍໜ້ອຍກ່ວາ 10%.

12. ຖ້າແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຫາກຈຳເປັນ, ມັນຈະໄດ້ເຮັດຕາມຫຼັກການທາງດ້ານນະໂຍບາຍແລະກົນໄກການວາງແຜນແລະຈັດຕັ້ງປະຕິບັດ ກໍຈະໄດ້ສ້າງຂຶ້ນຕາມກອບດັ່ງກ່າວ. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ອີງໃສ່ຂໍ້ມູນການສຳຫຼວດພື້ນຖານດ້ານເສດຖະກິດ-ສັງຄົມແລະປະຊາກອນພື້ນຖານແລະມາດຕະການຫຼຸດຜ່ອນຜົນກະທົບທີ່ດີ (ເຊັ່ນທົດແທນຄ່າເສຍຫາຍຂອງຊັບສິນ, ການຊ່ວຍເຫຼືອໄລຍະຂ້າມຜ່ານ, ການຊ່ວຍເຫຼືອໃນການຟື້ນຟູເສດຖະກິດສຳລັບຜົນກະທົບທີ່ບໍ່ດີທຸກປະເພດ. ອີງໃສ່ຜົນກະທົບປະເພດຕ່າງໆເຫຼົ່ານີ້, ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຈະໄດ້ແກ້ໄຂບັນຫາດັ່ງຕໍ່ໄປນີ້:

    (1) ລາຍລະອຽດຂອງກິດຈະກຳທີ່ເຮັດໃຫ້ມີການເວນທີ່ດິນຄືນ
    (2) ຂະໜາດແລະຂອບເຂດຂອງຜົນກະທົບທີ່ບໍ່ດີທີ່ອາດເກີດຂຶ້ນ
    (3) ການສຳຫຼວດເສດຖະກິດ-ສັງຄົມແລະການສຳຫຼວດປະຊາກອນເພື່ອເປັນຂໍ້ມູນພື້ນຖານ
    (4) ກວດຄືນລະບຽບກົດໝາຍກ່ຽວກັບການຄຸ້ມຄອງແລະການຍົກຍ້າຍຈັດສັນປະຊາຊົນ
    (5) ອັດຕາການທົດແທນຄ່າເສຍຫາຍສະເພາະ (ຫຼືມາດຕະການທາງເລືອກອື່ນ) ສຳລັບຊັບສິນທີ່ໄດ້ຮັບຜົນກະທົບທຸກປະເພດ

(6) ມາດຕະການອື່ນໆທີ່ຈຳເປັນເພື່ອໃຫ້ໂອກາດໃນການຟື້ນຟູເສດຖະກິດຂອງຜູ້ທີ່ຖືກຍົກຍ້າຍ, ຖ້າມີ;

(7) ບັນທັດຖານໃນການຮັບສິດທົດແທນຄ່າເສຍຫາຍແລະການຊ່ວຍເຫຼືອຮູບແບບອື່ນທັງໝົດ;

(8) ກົນໄກການຍົກຍ້າຍຕາມຄວາມຈຳເປັນ, ລວມທັງການຊ່ວຍເຫຼືອໃນການຂົນສົ່ງ;

(9) ການເລືອກແລະກະກຽມສະຖານທີ່, ຕາມຄວາມຈຳເປັນ;

(10) ການຟື້ນຟູແລະປ່ຽນແທນໂຄງລ່າງຂອງຊຸມຊົນແລະການບໍລິການ;

(11) ກົນໄກການຈັດຕັ້ງເພື່ອຈັດຕັ້ງປະຕິບັດແຜນ;

(12) ກົນໄກການປຶກສາຫາລືແລະເຜີຍແຜ່ຂ່າວສານ;

(13) ຕາຕະລາງເວລາຈັດຕັ້ງປະຕິບັດແຜນຍົກຍ້າຍຈັດສັນປະຊາຊົນ;

(14) ມູນຄ່າແລະງົບປະມານ;

(15) ກົນໄກການຕິດຕາມກວດກາ;

(16) ລະບຽບການໄກ່ເກ່ຍ;

(17) ຕາຕະລາງສັງລວມສິດທີ່ໄດ້ຮັບໂດຍຫຍໍ້.

13. ຖ້າເຮັດແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນຫຍໍ້, ຕ້ອງໄດ້ອີງໃສ່ຫຼັກການແລະກົນໄກການວາງແຜນຈັດຕັ້ງປະຕິບັດທີ່ສ້າງຂຶ້ນ ໃນແຜນສຳລັບຂະບວນຍົກຍ້າຍຈັດສັນປະຊາຊົນ. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນຫຍໍ້ ຈະມີເນື້ອໃນສຳຄັນດັ່ງຕໍ່ໄປນີ້:

(1) ສຳຫຼວດຜູ້ທີ່ຖືກຍົກຍ້າຍແລະຍັ້ງຢືນຊັບສິນ;

(2) ລາຍລະອຽດຂອງການທົດແທນຄ່າເສຍຫາຍແລະການຊ່ວຍເຫຼືອທີ່ຕິດພັນກັບການຍົກຍ້າຍຈັດສັນປະຊາຊົນທີ່ຈະໃກ້;

(3) ບັນທັດຖານໃນການຮັບສິດທົດແທນຄ່າເສຍຫາຍ;

(4) ກົນໄກການປຶກສາຫາລືແລະເຜີຍແຜ່ຂ່າວສານ;

(5) ກົນໄກການຈັດຕັ້ງເພື່ອຈັດຕັ້ງປະຕິບັດແຜນ;

(6) ຕາຕະລາງແລະງົບປະມານ;

(7) ກົນໄກການຕິດຕາມກວດກາ;

(8) ລະບຽບການໄກ່ເກ່ຍ.

14. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຄົບຖ້ວນຕ້ອງໄດ້ສະເໜີໃຫ້ທະນາຄານໂລກກວດກາແລະຮັບຮອງກ່ອນຈະຈັດຕັ້ງປະຕິບັດໂຄງການຍ່ອຍ. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນຫຍໍ້ຕ້ອງໄດ້ສະເໜີໃຫ້ ຄສລ/ກປສ ກວດກາແລະຮັບຮອງກ່ອນຈະຈັດຕັ້ງປະຕິບັດໂຄງການຍ່ອຍ. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນທັງໝົດ ຕ້ອງໄດ້ເຜີຍແຜ່ໃນທ້ອງຖິ່ນເພື່ອໃຫ້ຜູ້ທີ່ຖືກຍົກຍ້າຍ ສາມາດເຂ□າເຖິງໄດ້ແລະເກັບໄວ້ຢູ່ແຟ້ມຂອງ ຄສລ/ປກສ.

## VI. ນະໂຍບາຍກ່ຽວກັບສິດທີ່ໄດ້ຮັບ

- **ຜູ້ທີ່ຖືກຍົກຍ້າຍທັງໝົດມີສິດໄດ້ຮັບການທົດແທນຄ່າເສຍຫາຍແລະການຊ່ວຍເຫຼືອປະເພດອື່ນໆຕາມລັກສະນະຂອງຜົນກະທົບທີ່ເຂົາເຈ□າໄດ້ຮັບ.**

15. ໂດຍທົ່ວໄປແລ້ວ, ຜູ້ທີ່ມີສິດໄດ້ຮັບການທົດແທນຄ່າເສຍຫາຍຈະມີຜູ້ທີ່ໄດ້ຮັບຜົນກະທົບຕາມວິທີດັ່ງຕໍ່ໄປນີ້:

    - <u>ທີ່ດິນທີ່ຈະຍົກໃຫ້ໂຄງການເລີຍ</u>: ໃນນີ້ມີ (i) ເຈ□າຂອງທີ່ມີໃບກຳມະສິດຖືກຕ້ອງຕາມກົດໝາຍ, (ii) ຜູ້ນຳໃຊ້ທີ່ດິນທີ່ມີສິດນຳໃຊ້ຖືກຕ້ອງຕາມກົດໝາຍຂອງ ສປປລາວ, ແລະ (iii) ຜູ້ທີ່ອາໄສຢູ່, ຫຼືນຳໃຊ້ດິນລັດກ່ອນມື້ກຳນົດສິດ, ສ່ວນຫຼາຍມື້ແຈ້ງໃຫ້ມວນຊົນຊາບກ່ຽວກັບກິດຈະກຳກໍ່ສ້າງສະເພາະທີ່ຈະມີການຍົກຍ້າຍຈັດສັນປະຊາຊົນ. ຜູ້ທີ່ຖືກຍົກຍ້າຍໃນປະເພດ (i) ແລະ (ii) ມີສິດໄດ້ທົນຮອນໃນມູນຄ່າປ່ຽນແທນ. ຜູ້ທີ່ຖືກຍົກຍ້າຍໃນປະເພດ (iii), ແທນທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ, ຈະໄດ້ຮັບການຊ່ວຍເຫຼືອຮູບແບບອື່ນ ໃນມູນຄ່າເທົ່າກັບມູນຄ່າປ່ຽນແທນ.
    - <u>ການສູນເສຍເຮືອນ, ໂຄງຮ່າງແລະຊັບສິນບັດຄົງທີ່ອື່ນໆ ລວມທັງຕ□ນໄມ ແລະ ພືນລະປູກ</u>: ເຈົ້າຂອງເຮືອນແລະຊັບສິນອື່ນໆ (ບໍ່ກ່ຽວກັບວ່າຈະມີກຳມະສິດທີ່ດິນຫຼືໃບອະນຸຍາດກໍ່ສ້າງໂຄງຮ່າງທີ່ໄດ້ຮັບກ່ອນມື້ກຳນົດສິດຫຼືບໍ່).
    - <u>ການສູນເສຍຍ້ອນຜົນກະທົບຊົ່ວຄາວ</u>: ໃນນີ້ມີການສູນເສຍດິນຊົ່ວຄາວແລະຄ່າອຸດໜູນໃນໄລຍະຂ້າມຜ່ານທີ່ຕິດພັນກັບການຍົກຍ້າຍ, ການລົບກວນທຸລະກິດໃນເວລາກໍ່ສ້າງ.

16. ໂດຍສະເພາະແລ້ວ, ຜູ້ທີ່ຖືກຍົກຍ້າຍຈະໄດ້ຮັບສິດຈາກມາດຕະການທົດແທນຄ່າເສຍຫາຍແລະຟື້ນຟູເສດຖະກິດ ປະເພດຕໍ່ໄປນີ້:

    *1). ຜູ້ທີ່ຖືກຍົກຍ້າຍທີ່ໄດ້ເສຍທີ່ດິນກະສິກຳ:*

    (i) ກົນໄກທີ່ມັນດີທີ່ສຸດເພື່ອຊົດເຊີຍທີ່ດິນກະສິກຳທີ່ເສຍໄປ ແມ່ນການປ່ຽນທີ່ດິນທີ່ມີຄວາມສາມາດຜະລິດເທົ່າເກົ່າແລະເປັນທີ່ພໍໃຈແທນໃຫ້ຜູ້ທີ່ຖືກຍົກຍ້າຍ. ຖ້າຫາກບໍ່ສາມາດຊອກທີ່ດິນມາປ່ຽນແທນຢ່າງພໍໃຈໄດ້, ການທົດແທນຄ່າເສຍຫາຍໃນມູນຄ່າປ່ຽນແທນກໍອາດພໍເຮັດໄດ້.

    (ii) ຜູ້ທີ່ຖືກຍົກຍ້າຍ ຈະໄດ້ຮັບການທົດແທນການສູນເສຍພືນລະປູກໃນລາຄາຕະຫຼາດ. ສຳລັບຕ□ນໄມ້ເສດຖະກິດໃນມູນຄ່າເປັນເງິນສົດ ແລະ ສຳລັບຊັບສິນອື່ນໆ (ໂຄງລ່າງທີ່ຕິດພັນມາ, ນ້ຳສ້າງ, ຮ□ວ, ຊົນລະປະທານ) ໃນມູນຄ່າປ່ຽນແທນ.

    (iii)ການທົດແທນຄ່າເສຍຫາຍ ຈະຈ່າຍໃຫ້ສຳລັບທີ່ດິນທີ່ຖືກຄອບຄອງຊົ່ວຄາວ, ຕາມອັດຕາທີ່ຕິດພັນກັບໄລຍະເວລາຖືກຄອບຄອງທີ່ດິນ ແລະ ຊັບສິນອື່ນໆ ຈະໄດ້ຖືກຟື້ນຟູໃຫ້ຢູ່ສະພາບການນຳໃຊ້ໃນເມື່ອກ່ອນ ໂດຍບໍ່ໃຫ້ເຈ□າຂອງຫຼືຜູ້ນຳໃຊ້ນັ້ນເສຍຄ່າຫຍັງ.

    (iv)ການປະກອບສ່ວນແບບສະໝັກໃຈສຳລັບທີ່ດິນ (ກະສິກຳຫຼືດິນເປົ່າຫວ່າງຂອງເຮືອນ) ກໍເຮັດໄດ້ ກໍແຕ່ເມື່ອຈຳນວນທີ່ດິນທີ່ປະກອບສ່ວນນັ້ນ ບໍ່ເຖິງ 5% ຂອງດິນເຮືອນທັງໝົດ. ການ

ປະກອບສ່ວນດັ່ງກ່າວ ເປັນທີ່ຮັບໄດ້ກໍແຕ່ເມື່ອຜູ້ປະກອບສ່ວນນັ້ນເຂ□າໃຈສິດທິຂອງຕົນ (ລວມ ທັງສິດທິ ທີ່ຈະປະຕິເສດຖ້າບໍ່ໄດ້ການທົດແທນຄ່າເສຍຫາຍ). ລາຍເຊັນຫຼືແປະໂປ້ທີ່ຢັ້ງຢືນການປະກອບສ່ວນແບບສະໝັກໃຈ ຕ້ອງໄດ້ສົ່ງມາໃຫ້ກ່ອນຈະອະນຸມັດໂຄງການຍ່ອຍ, ແລະເອກະສານດັ່ງກ່າວ ຈະເກັບໄວໃນແຟັມຂອງ ຄສລ/ກປສ.

*2). ຜູ້ທີ່ຖືກຍົກຍ້າຍ ທີ່ເສຍດິນເຮືອນແລະໂຄງລ່າງຕ່າງໆ:*

(i) ການສູນເສຍດິນເຮືອນແລະໂຄງລ່າງຕ່າງໆ ຈະໄດ້ຮັບການທົດແທນເປັນວັດຖຸ (ຈາກການປ່ຽນແທນເຮືອນແລະສວນໃນຂະໜາດເທົ່າເດີມ, ເປັນທີ່ພໍໃຈໃຫ້ຜູ້ທີ່ຖືກຍົກຍ້າຍ, ຫຼືເປັນເງິນສົດໃນມູນຄ່າປ່ຽນແທນ.

(ii) ຖ້າພາຍຫຼັງເວນຄືນທີ່ດິນສ່ວນໜຶ່ງ, ດິນເຮືອນທີ່ຍັງເຫຼືອບໍ່ພໍຈະປຸກຫຼືແປງເຮືອນແລະໂຄງລ່າງອື່ນໆໃໝ່ໄດ້ໃນຂະໜາດເກົ່າຫຼືມູນຄ່າເກົ່າ, ເມື່ອຜູ້ທີ່ຖືກຍົກຍ້າຍຂໍມາ, ດິນເຮືອນແລະໂຄງລ່າງທັງໝົດ ຈະໄດ້ທົດແທນໃນມູນຄ່າທີ່ປ່ຽນແທນໄດ້.

(iii)ການທົດແທນຄ່າເສຍຫາຍ ຈະຈ່າຍໃນມູນຄ່າປ່ຽນແທນສໍາລັບຊັບສົມບັດຄົງທີ່.

(iv)ຜູ້ເຊົ່າເຮືອນຢູ່ ຈະໄດ້ຮັບເງິນຊ່ວຍເຫຼືອລ້າເປັນເງິນສົດໃນມູນຄ່າເຊົ່າ 3 ເດືອນຕາມລາຄາຕະຫຼາດຢູ່ໃນເຂດດັ່ງກ່າວ ແລະ ຈະໄດ້ຮັບການຊ່ວຍເຫຼືອໃນການຊອກຫາບ່ອນພັກທີ່ເປັນທາງເລືອກອື່ນ.

*3). ຜູ້ທີ່ຖືກຍົກຍ້າຍ ທີ່ສູນເສຍທຸລະກິດ:*

- ການທົດແທນຄ່າເສຍຫາຍຈາກທຸລະກິດ, ເມື່ອເຮັດໄດ້, ຈະພົວພັນກັບ (i) ການຫາບ່ອນເຮັດທຸລະກິດໃໝ່ໃນຂະໜາດເທົ່າເດີມ ແລະ ລູກຄ້າເຂ□າເຖິງງ່າຍ, ເປັນທີ່ພໍໃຈຈາກເຈ□າຂອງທຸລະກິດທີ່ໄດ້ຖືກຍົກຍ້າຍ; (ii) ການທົດແທນເປັນເງິນສົດ ສໍາລັບໂຄງລ່າງທຸລະກິດ, ແລະ (iii) ການສະໜັບສະໜູນໃນໄລຍະຂ້າມຜ່ານເພາະເສຍລາຍໄດ້ (ລວມທັງເງິນເດືອນຂອງກໍາມະກອນ).

*4). ໂຄງລ່າງແລະການເຂ□າເຖິງການບໍລິການ*

- ໂຄງລ່າງ (ເຊັ່ນແຫຼ່ງນໍ້າ, ເສັ້ນທາງ, ລະບົບນໍ້າເປື້ອນຫຼືໄຟຟ້າ) ແລະການບໍລິການຊຸມຊົນ (ເຊັ່ນໂຮງຮຽນ, ໂຮງໝໍຫຼືສູນຂອງຊຸມຊົນ) ຈະຕ້ອງໄດ້ຮັບການຟື້ນຟູຫຼືປ່ຽນແທນໂດຍບໍ່ໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບ ເສຍຄ່າຫຍັງ. ຖ້າກໍານົດເຂດຍົກຍ້າຍໄປຢູ່ໃໝ່, ການສ້າງໂຄງລ່າງ ແລະການບໍລິການທີ່ດີໃນມາດຕະຖານທ້ອງຖິ່ນ ຈະບໍ່ໄດ້ໃຫ້ຜູ້ທີ່ຖືກຍົກຍ້າຍເສຍຄ່າຫຍັງ.

## *VII. ມາດຕະການຟື້ນຟູເສດຖະກິດ*

17. ການທົດແທນຄ່າເສຍຫາຍ ອາດພຽງພໍເພື່ອໃຫ້ຜູ້ທີ່ຖືກຍົກຍ້າຍຟື້ນຟູລາຍໄດ້ ຖ້າຈ່າຍໃນມູນຄ່າປ່ຽນແທນ, ຖ້າມີຊັບສິນທີ່ປ່ຽນແທນໃຫ້ແທ້. ຢ່າງໃດກໍດີ, ສ່ວນຫຼາຍການຍົກຍ້າຍຈັດສັນປະຊາຊົນຮຽກຮ້ອງໃຫ້ຜູ້ທີ່ຖືກຍົກຍ້າຍ ຕ້ອງມີຄວາມຮູ້ໃໝ່ເພື່ອເຮັດການຜະລິດໃນສິ່ງແວດລ້ອມໃໝ່ຫຼືເພື່ອສືບຕໍ່

ຫາແຫຼ່ງລາຍຮັບໃໝ່. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຄວນປະເມີນຄວາມສຳຄັນຂອງຜົນກະທົບຕໍ່ຜູ້ທີ່ຖືກຍົກຍ້າຍ ແລະວາງມາດຕະການເພື່ອຊ່ວຍຜູ້ທີ່ໄດ້ຮັບຜົນກະທົບຫຼາຍໃນການປັບຕົວເຂ□າໃນສິ່ງທ້າທາຍໃນການທຳມາຫາກິນໃໝ່. ການມີສ່ວນຮ່ວມໃນມາດຕະການດັ່ງກ່າວ ມີການຍົກລະດັບ, ການບໍລິການສົ່ງເສີມ, ຫຼືການໃຫ້ວຽກເຮັດງານທຳ ພ້ອມທັງຄວາມຮັບຜິດຊອບເພື່ອສະໜອງໃຫ້ເຂົາເຈ□າກໍຄວນກຳນົດໃຫ້ລະອຽດໃນ ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ.

## *VIII. ການປຶກສາຫາລືແລະເຜີຍແຜ່ຂ່າວສານ*

18. ເພື່ອສົ່ງເສີມການເຂ□າຮ່ວມໃນໂຄງການຢ່າງຫ້າວຫັນ ແລະການປັບເຂ□າສະພາບການດຳລົງຊີວິດທີ່ມີການປ່ຽນແປງ, ຜູ້ທີ່ຖືກຍົກຍ້າຍ ຄວນມີໂອກາດເພື່ອເຂ□າຮ່ວມໃນການວາງແຜນແລະຈັດຕັ້ງປະຕິບັດແຜນ. ຢ່າງໜ້ອຍສຸດ ກໍຄວນມີການປຶກສາຫາລືກັບຜູ້ທີ່ຖືກຍົກຍ້າຍກ່ຽວກັບຄວາມມັກແລະຄວາມສົນໃຈໃນຂະບວນການວາງແຜນຍົກຍ້າຍຈັດສັນປະຊາຊົນ. ຜູ້ທີ່ຖືກຍົກຍ້າຍທັງໝົດຕ້ອງໄດ້ຮັບຂ່າວສານກ່ຽວກັບຜົນກະທົບທີ່ອາດເກີດຂຶ້ນແລະມາດຕະການຫຼຸດຜ່ອນຜົນກະທົບທີ່ສະເໜີມາ, ລວມທັງອັດຕາທົດແທນຄ່າເສຍຫາຍ. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຕ້ອງໄດ້ເອົາໄປເຜີຍແຜ່ຕາມແບບວິທີແລະບ່ອນທີ່ຜູ້ທີ່ຖືກຍົກຍ້າຍສາມາດເຂ□າເຖິງໄດ້ງ່າຍໃນເວລາມັນຍັງເປັນຮ່າງຢູ່ ແລະເມື່ອເຮັດແລ້ວ.

## *IX. ກົນໄກການຈັດຕັ້ງປະຕິບັດ*

19. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຕ້ອງໄດ້ທົບທວນກົນໄກການຈັດຕັ້ງ ເພື່ອຮັບປະກັນວ່າຂັ້ນຕອນການຈັດຕັ້ງປະຕິບັດຈະແຈ້ງ, ວ່າຄວາມຮັບຜິດຊອບກໍໄດ້ວາງອອກແຈ້ງເພື່ອໃຫ້ການຊ່ວຍເຫຼືອໃນທຸກຮູບແບບ ແລະ ວ່າມີການປະສານງານທີ່ດີກັບທຸກອົງການທີ່ພົວພັນກັບອົງການຈັດຕັ້ງປະຕິບັດແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ. ແຜນດັ່ງກ່າວຕ້ອງລວມເອົາເວລາຈັດຕັ້ງປະຕິບັດລະອຽດພ້ອມທັງສາຍພົວພັນລະຫວ່າງຕາຕະລາງເວລາສຳລັບການກໍ່ສ້າງຂອງໂຄງການ ກັບກິດຈະກຳທີ່ພົວພັນກັບການຍົກຍ້າຍຈັດສັນປະຊາຊົນ. ຕາຕະລາງຈັດຕັ້ງປະຕິບັດ ຄວນວາງໄວ້ວ່າການທົດແທນຄ່າເສຍຫາຍ (ເປັນເງິນສົດແລະວັດຖຸ) ຄວນຈະແລ້ວຢ່າງໜ້ອຍໜຶ່ງເດືອນ ກ່ອນຈະເລີ່ມວຽກກໍ່ສ້າງ, ແລະຢ່າງໜ້ອຍ 3 ເດືອນ ກ່ອນຈະທຳລາຍໂຄງລ່າງສຳລັບທີ່ພັກອາໄສ.

## *X. ມູນຄ່າແລະງົບປະມານ*

20. ແຕ່ລະແຜນຍົກຍ້າຍຈັດສັນປະຊາຊົນຫຍໍ້ຫຼືຄົບຖ້ວນ ຈະມີຄ່າທົດແທນຄ່າເສຍຫາຍລະອຽດແລະສິດທິທີ່ຈະໄດ້ຮັບການຟື້ນຟູອື່ນໆ ແລະການຍົກຍ້າຍຜູ້ທີ່ຖືກຍົກຍ້າຍ, ແລະຖ້າເຮັດໄດ້ ກໍແຍກອອກເປັນທີ່ດິນກະສິກຳ, ທີ່ດິນເຮືອນ, ທີ່ດິນທຸລະກິດ, ເຮືອນ, ທຸລະກິດແລະຊັບສິນອື່ນໆ. ມູນຄ່າທີ່ຄາດໄວ້ຈະຕ້ອງມີເງິນແຮທີ່ເໝາະສົມ. ແຜນຍົກຍ້າຍຈັດສັນປະຊາຊົນ ຍັງຈະກຳນົດແຫຼ່ງທຶນທີ່ຕ້ອງການແລະຈະຮັບປະກັນວ່າທຶນຮອນ ຈະໂອນມາໃຫ້ຖືກກັບຕາຕະລາງເວລາເພື່ອຈ່າຍຄ່າທົດແທນຄ່າເສຍຫາຍແລະການໃຫ້ການຊ່ວຍເຫຼືອອື່ນໆ.

## *XI. ຂັ້ນຕອນໄກ່ເກ່ຍຂໍ້ຂັດແຍ່ງ*

21. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຈະສ້າງວິທີເພື່ອໃຫ້ຜູ້ທີ່ຖືກຍົກຍ້າຍສາມາດຮ້ອງທຸກໃຫ້ຄະນະຮັບຜິດຊອບໂຄງການທີ່ກ່ຽວຂ້ອງໄດ້ເອົາໃຈໃສ່. ຂັ້ນຕອນໄກ່ເກ່ຍຄວນມີມາດຕະຖານທີ່ສົມເຫດສົມຜົນ ເຊັ່ນເວລາທີ່ຕ້ອງການເພື່ອຕອບຄຳຮ້ອງທຸກ ແລະຄວນໃຫ້ຄຳຕອບແກ່ຜູ້ທີ່ຖືກຍົກຍ້າຍໂດຍບໍ່ເສຍຄ່າ. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຄວນກຳນົດວິທີໃຫ້ແກ່ຜູ້ທີ່ຮ້ອງທຸກ ຖ້າຂັ້ນຕອນຂອງໂຄງການ ຫາກບໍ່ສາມາດແກ້ໄຂຄຳຮ້ອງທຸກໄດ້.

## XII. ການຕິດຕາມກວດກາການຍົກຍ້າຍຈັດສັນປະຊາຊົນ

22. ນອກຈາກກົນໄກຕິດຕາມກວດກາໂຄງການພາຍໃນແລ້ວ, ເຈ□າຂອງໂຄງການ ຈະຮັບປະກັນວ່າການຈັດຕັ້ງປະຕິບັດແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຈະໄດ້ຮັບການຕິດຕາມກວດກາໂດຍອົງການທີ່ມີວຸດທິແລະເອກະລາດຈາກອົງການຈັດຕັ້ງປະຕິບັດໂຄງການ. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຄວນກຳນົດກອບແລະຄວາມຖີ່ຂອງວຽກຕິດຕາມກວດກາ. ບົດລາຍງານການຕິດຕາມກວດກາພາຍນອກ ຈະໄດ້ສ້າງຂຶ້ນເພື່ອສົ່ງໃຫ້ ຄສລ ແລະທະນາຄານໂລກ.

## XIII. ແຜນສຳລັບຂະບວນຍົກຍ້າຍຈັດສັນປະຊາຊົນ

23. ໂຄງການຍ່ອຍທີ່ພົວພັນໄປຫາວຽກອະນຸລັກ ອາດຈຳກັດເສັ້ນທາງເຂ□າຫາຊັບພະຍາກອນທຳມະຊາດຢູ່ໃນຫຼືອ້ອມແອ້ມປ່າສະຫງວນທີ່ໄດ້ປະກາດແລ້ວ. ໃນກໍລະນີດັ່ງກ່າວ, ຈຸດປະສົງໃນການຮັບປະກັນໃຫ້ຜູ້ທີ່ຖືກຍົກຍ້າຍໄດ້ຮັບການຊ່ວຍເຫຼືອ ເພື່ອປັບປຸງຫຼືຢ່າງໜ້ອຍກໍ່ຟື້ນຟູລາຍຮັບແລະມາດຕະຖານຊີວິດຕ້ອງໄດ້ຈາກຂະບວນການຫຼຸດຜ່ອນຜົນກະທົບແບບມີສ່ວນຮ່ວມ ຕາມທີ່ໄດ້ວາງໄວ້ໃນແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ. ໃນກໍລະນີດັ່ງກ່າວ, ຜູ້ທີ່ຖືກຍົກຍ້າຍ ເຂ□າຮ່ວມໃນການອອກແບບໂຄງການຍ່ອຍ ລວມທັງການກຳນົດການຈຳກັດບໍ່ໃຫ້ເຂ□າເຖິງຊັບພະຍາກອນ. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ໄດ້ອະທິບາຍວ່າຂະບວນການມີສ່ວນຮ່ວມ ຊຶ່ງໂຄງການຍ່ອຍຈະໄດ້ອອກແບບແລະຈັດຕັ້ງປະຕິບັດ, ບັນທັດຖານເພື່ອໃຫ້ສິດແກ່ຜູ້ທີ່ຖືກຍົກຍ້າຍ ຈະໄດ້ກຳນົດອອກ, ການຊ່ວຍເຫຼືອໃນການດຳລົງຊີວິດສຳລັບຜູ້ທີ່ຖືກຍົກຍ້າຍ ກໍ່ຈະໄດ້ກຳນົດອອກມາ, ແລະຈະແກ້ຂໍ້ຂັດແຍ່ງທີ່ມາຈາກການຈຳກັດການເຂ□າໄປເຖິງຊັບພະຍາກອນແນວໃດ?

24. ແຜນດຳເນີນງານຍົກຍ້າຍຈັດສັນປະຊາຊົນ ຄວນອະທິບາຍລະອຽດຂໍ້ຕົກລົງນຳກັນກັບພະນັກງານແຂວງແລະເມືອງທີ່ກ່ຽວຂ້ອງ ເພື່ອຮັບປະກັນວ່າຈະມີການຮ່ວມມືຢ່າງເຕັມປ່ຽມກັບຂະບວນການທີ່ຈະໄດ້ສ້າງຂຶ້ນ (ລວມທັງການແຍກຄວາມຮັບຜິດຊອບດ້ານບໍລິຫານແລະການເງິນ) ຕາມທີ່ຈຳເປັນ. ແຜນສຳລັບຂະບວນຍົກຍ້າຍຈັດສັນປະຊາຊົນ ຄວນອະທິບາຍກົນໄກການຕິດຕາມກວດກາກ່ຽວກັບຜົນກະທົບ ທີ່ຕິດພັນກັບການຈຳກັດໃນການເຂ□າເຖິງຊັບພະຍາກອນ ລວມທັງປະສິດທິພາບຂອງມາດຕະການຫຼຸດຜ່ອນຜົນກະທົບອັນຈຳເປັນ ເພື່ອປັບປຸງຊີວິດການເປັນຢູ່ (ຫຼືຟື້ນຟູ) ໂດຍບໍ່ກ່ຽວກັບຂະບວນການ.

## XIV. ແກ້ໄຂຄວາມບໍ່ຖືກຕ້ອງ

25. ຄືຢູ່ໃນເອກະສານທາງການຂອງໂຄງການ, ຖ້າບໍ່ມີຄວາມຖືກຕ້ອງລະຫວ່າງລະບຽບກົດໝາຍຕ່າງໆ ຂອງ ສປປລາວ ແລະ ແຜນສຳລັບຂະບວນຍົກຍ້າຍຈັດສັນປະຊາຊົນສະບັບນີ້, ກົດໝາຍຫຼືລະບຽບພາຍໃນຄວນເປີດກວ້າງເທົ່າທີ່ຈຳເປັນ ເພື່ອບັນລຸຈຸດປະສົງທີ່ກຳນົດໃນກອບດັ່ງກ່າວ.

## ເອກກະສານຂັດຕິດ ຄ. ເນື້ອໃນພັດທະນາຊົນເຜົ່າ

### ພາກສະເຫນີ

### *I. ຄສລ/ກປສ ແລະນະໂຍບາຍກ່ຽວກັບຊົນເຜົ່າ OP 4.10.*

1. ເມື່ອເປັນເງື່ອນໄຂຂອງການສະໜັບສະໜູນຂອງທະນາຄານໂລກ, ຄສລ/ກປສ ຈະຕ້ອງເຮັດຕາມເງື່ອນໄຂຂອງນະໂຍບາຍ 4.10 (ຄົນພື້ນເມືອງ) ຂອງທະນາຄານໂລກ. ນະໂຍບາຍດັ່ງກ່າວຮຽກຮ້ອງໃຫ້ສ້າງມາດຕະການວາງແຜນພິເສດ ເພື່ອປົກປັກຮັກສາຜົນປະໂຫຍດຂອງຊົນເຜົ່າ ທີ່ມີເອກະລັກທາງດ້ານສັງຄົມແລະວັດທະນາທໍາຕ່າງໆຈາກສັງຄົມສ່ວນໃຫຍ່ ທີ່ອາດເຮັດໃຫ້ເຂົາເຈ□າເປັນຜູ້ດ້ອຍໂອກາດແລະເສຍຫາຍໃນຂະບວນພັດທະນາ.

2. ຄືກໍານົດໃນນະໂຍບາຍດັ່ງກ່າວ, ຊົນເຜົ່າອາດຈັດຕາມທ້ອງຖິ່ນໂດຍມີລັກສະນະດັ່ງນີ້:
   (i) ມີການຜູກພັນກັບດິນດອນຕອນຫຍ້າຂອງປູ່ຍ່າຕາຍາຍແລະທໍາມະຊາດໃນເຂດນີ້;
   (ii) ຮູ້ຕົວເອງດີຫຼືຜູ້ອື່ນຮູ້ດີວ່າເປັນສະມາຊິກຂອງກຸ່ມວັດທະນະທໍາໜຶ່ງຈະແຈ້ງ;
   (iii)ພາສາພື້ນເມືອງສ່ວນຫຼາຍຕ່າງຈາກພາສາແຫ່ງຊາດ;
   (iv)ມີການຈັດຕັ້ງທາງດ້ານສັງຄົມແລະການເມືອງທີ່ຕິກທອດຕໍ່ກັນມານານ.

3. ອີງໃສ່ລັກສະນະເທິງນີ້, ຢູ່ ສປປລາວ ມີຫຼາຍຊົນເຜົ່າ ຕາມແນວລາວສ້າງຊາດໄດ້ຈັດມາໃນບໍ່ດົນນີ້, ປະເທດລາວມີ 4 ກຸ່ມພາສາ, 49 ຊົນເຜົ່າ. ຊົນເຜົ່າຕ່າງໆທີ່ບໍ່ແມ່ນລາວມີປະມານ 40% ຂອງພົນລະເມືອງ ຊຶ່ງມີກຸ່ມເຜົ່າລາວ-ໄທ, ມອນຂະແມ, ມ□ງ-ອິວມ້ຽນ ແລະຈີນທິເບດ. ທະນາຄານໂລກໄດ້ກໍານົດວ່າ ນະໂຍບາຍດັ່ງກ່າວຈະນໍາໃຊ້ກັບ 3 ກຸ່ມເຜົ່າຍົກເວັ້ນລາວ-ໄທ, ຜູ້ທີ່ຍັງຮັກສາວັດທະນາທໍາແລະເສດຖະກິດ-ສັງຄົມ ຕ່າງກັບຄົນສ່ວນຫຼາຍໃນປະເທດນີ້ຢູ່.

4. ນະໂຍບາຍດັ່ງກ່າວຮຽກຮ້ອງໃຫ້ຜູ້ກູ້ຢືມເງິນນໍາທະນາຄານໂລກ ຕ້ອງເຮັດການປຶກສາຫາລືກັບຊົນເຜົ່າທີ່ອາດໄດ້ຮັບຜົນກະທົບ ໂດຍບໍ່ໃຫ້ຊົນເຜົ່າເສຍຄ່າ, ເຮັດກ່ອນແລະມີຂ່າວສານຄົບຖ້ວນ. ໃນເມື່ອເປັນເງື່ອນໄຂ ເພື່ອຮັບຮອງເອົາໂຄງການ, ຂະບວນການປຶກສາຫາລື ຈະຕ້ອງໄດ້ກໍານົດລັກສະນະການສະໜັບສະໜູນຊຸມຊົນຢ່າງກວ້າງຂວາງ ສໍາລັບໂຄງການແລະຈຸດປະສົງຂອງມັນ. ໃນສະພາບຂອງໂຄງການນີ້, ມັນມີຄວາມສໍາຄັນທີ່ຈະຮູ້ວ່ານະໂຍບາຍດັ່ງກ່າວ ກ່ຽວຂ້ອງກັບກຸ່ມສັງຄົມແລະຊຸມຊົນບໍ່ແມ່ນບຸກຄົນ.
   – ຮັບປະກັນວ່າຊົນເຜົ່າໄດ້ຮັບໂອກາດທີ່ມີຄວາມໝາຍ ເພື່ອເຂ□າຮ່ວມໃນການວາງແຜນທີ່ມີຜົນກະທົບຕໍ່ເຂົາເຈ□າເອງ;
   – ຮັບປະກັນວ່າໂອກາດທີ່ໃຫ້ຜົນປະໂຫຍດແກ່ຊົນເຜົ່າທີ່ເໝາະສົມທາງດ້ານວັດທະນາທໍາ ໄດ້ຮັບການພິຈາລະນາ; ແລະ
   – ຮັບປະກັນວ່າຈະຫຼີກລ້ຽງບໍ່ໃຫ້ມີຜົນກະທົບຈາກໂຄງການຫຼືບໍ່ກໍມີໜ້ອຍສຸດແລະຖືກຫຼຸດຜ່ອນ.

5. ເມື່ອວຽກຂອງ ຄສລ ອາດສະໜັບສະໜູນໂຄງການຍ່ອຍ ໃນທົ່ວປະເທດ, ມັນອາດມີຜົນກະທົບຕໍ່ຊົນເຜົ່າໃນພາກຕ່າງໆ. ຄູ່ມືພັດທະນາຊົນເຜົ່າສະບັບ ນີ້ໄດ້ສ້າງຂຶ້ນເພື່ອກຳນົດຫຼັກການແລະລະບຽບລວມຈຳນວນໜຶ່ງທີ່ຈະໄດ້ນຳໃຊ້ໃນໄລຍະກະກຽມແລະຈັດຕັ້ງປະຕິບັດໂຄງການຍ່ອຍ, ຖ້າຫາກມີຊົນເຜົ່າໄດ້ຮັບຜົນກະທົບ. ດັ່ງນັ້ນ ສຳລັບ ຄສລ, ຈຸດປະສົງຂອງກອບດັ່ງກ່າວ ແມ່ນອັນໜຶ່ງເພື່ອຮັບປະກັນໃຫ້ມີການປຶກສາຫາລື, ໃຫ້ຊົນເຜົ່າມີສິດມີສຽງແລະໂອກາດໄດ້ຮັບຜົນປະໂຫຍດຈາກໂຄງການ.

## II. ການກວດເບິ່ງຊົນເຜົ່າໃນຜູ້ທີ່ໄດ້ຮັບຜົນກະທົບ

6. ການອອກແບບໂຄງການ ຮັບຮູ້ວ່າການເຂ□າຮ່ວມ "ຢ່າງມີຄວາມໝາຍ" ຂອງພາກສ່ວນທີ່ທຸກຍາກແລະດ້ອຍໂອກາດຂອງສັງຄົມ ຕ້ອງມີຈຸດສຸມພິເສດທີ່ອາດມີຫຼາຍກວ່າຂັ້ນຕອນເຮັດໂຄງການທົ່ວໄປ. ດັ່ງນັ້ນ, ໂຄງການຈຶ່ງຕ້ອງຕັດສິນໃຈແລະມີການຈັດຕັ້ງເພື່ອຮັບປະກັນວ່າຊົນເຜົ່າໄດ້ (i) ຮັບການປຶກສາຫາລື ໃນເລື້ອງທີ່ພົວພັນກັບແຕ່ລະໂຄງການຍ່ອຍ; (ii) ມີໂອກາດເພື່ອເຂ□າຮ່ວມໃນການຕັດສິນໃຈກ່ຽວກັບໂຄງການຍ່ອຍ; ແລະ (iii) ມີໂອກາດເພື່ອເຂ□າຮ່ວມໃນກິດຈະກຳຂອງໂຄງການຕາມທີ່ເຂົາເຈ□າມັກຊອບ.

7. ໃນເວລາກະກຽມຫຼືພິຈາລະນາບົດສະເໜີໂຄງການຍ່ອຍ, ຕ້ອງດຳເນີນຂະບວນການປະເມີນດ້ານສັງຄົມ ເພື່ອຮູ້ລັກສະນະແລະຂອບເຂດຂອງຜົນກະທົບຕໍ່ຊົນເຜົ່າ ໃນຈຳນວນຜູ້ທີ່ໄດ້ຮັບຜົນກະທົບທັງໝົດ. ໂດຍເກັບກຳເອົາຂໍ້ມູນທາງດ້ານປະລິມານແລະຄຸນນະພາບໃນເຂດໂຄງການ ດ້ວຍເຕັກນິກການປະເມີນແບບເລັ່ງລັດແລະມີສ່ວນຮ່ວມ, ກໍຈະຮູ້ໄດ້ສະພາບເສດຖະກິດແລະສັງຄົມພື້ນຖານຂອງປະຊາຊົນຜູ້ໄດ້ຮັບຜົນປະໂຫຍດຫຼືປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ.

## III. ຫຼັກການແລະລະບຽບນັ້ນຈະນຳໃຊ້ຖ້າໂຄງການຍ່ອຍຜົນກະທົບຕໍ່ຊົນເຜົ່າ

8. ຄສລ/ກປສ ຈະຮັບປະກັນວ່າຈະເຮັດການປຶກສາຫາລື ໂດຍບໍ່ໃຫ້ຊົນເຜົ່າເສຍຄ່າ, ເຮັດກ່ອນແລະມີຂ່າວສານຄົບຖ້ວນ ໃນພາສາຂອງຊົນເຜົ່າທີ່ໄດ້ຮັບຜົນກະທົບແລະສະຖານທີ່ທີ່ເໝາະກັບເຂົາເຈ□າ. ຄຳເຫັນຂອງຊົນເຜົ່າ ຈະໄດ້ເອົາໃຈໃສ່ໃນເວລາກະກຽມແລະຈັດຕັ້ງປະຕິບັດໂຄງການຍ່ອຍ, ໂດຍນັບຖືຮີດຄອງປະເພນີ, ຄວາມເຊື່ອຖືແລະຄວາມມັກຊອບທາງດ້ານວັດທະນະທຳ. ຜົນຂອງການປຶກສາຫາລື ຈະໄດ້ເຮັດເປັນເອກະສານຂອງໂຄງການ.

9. ຖ້າຊົນເຜົ່າສະຫຼຸບໄດ້ວ່າໂຄງການຍ່ອຍ ຈະນຳຜົນປະໂຫຍດມາໃຫ້ເຂົາເຈ□າແລະຜົນກະທົບທີ່ບໍ່ດີໄດ້ຖືກແກ້ໄຂ, ຈະຕ້ອງໄດ້ສ້າງແຜນເພື່ອຊ່ວຍເຂົາເຈ□າ ໂດຍອີງໃສ່ການປຶກສາຫາລືກັບຊົນເຜົ່າແລະຜູ້ຕາງໜ້າແນວລາວສ້າງຊາດຢູ່ທ້ອງຖິ່ນ. ຊຸມຊົນຄວນໄດ້ຮັບການປຶກສາຫາລືເພື່ອຮັບປະກັນວ່າຈະມີການນັບຖືສິດທິແລະວັດທະນະທຳຂອງເຂົາເຈ□າ. ການສະໜັບສະໜູນ ອາດມີການປັບປຸງການຈັດຕັ້ງໃຫ້ເຂັ້ມແຂງແລະການສ້າງຄວາມສາມາດໃຫ້ບ້ານຊົນເຜົ່າແລະຊຸມຊົນທີ່ເຮັດວຽກກັບໂຄງການຍ່ອຍ.

## IV. ບົດລາຍງານ, ການຕິດຕາມກວດກາແລະການສ້າງເອກະສານ

10. ຂະບວນການກັ່ນກອງ, ປະເມີນຜົນດ້ານສັງຄົມແລະປຶກສາຫາລື ຈະໃຫ້ຂໍ້ມູນພື້ນຖານຮອບດ້ານທາງດ້ານສັງຄົມ, ເສດຖະກິດແລະເຕັກນິກຂອງແຕ່ລະໂຄງການຍ່ອຍ. ອັນນີ້ຍັງລວມການສ້າງແຜນທີ່ແບບມີສ່ວນຮ່ວມກ່ຽວກັບການມີເສັ້ນທາງແລະການບໍລິການອື່ນໆໃນຊຸມຊົນ. ຖ້າການປະເມີນດ້ານສັງຄົມຊີ້ໃຫ້ເຫັນວ່າ ມັນອາດມີບັນຫາສັງຄົມເພາະມີຊົນເຜົ່າຢູ່ໃນເຂດໂຄງການ, ຈະຕ້ອງຮັບປະກັນວ່າຜູ້ໃຫ້ທຶນແກ່ໂຄງການຈະດຳເນີນມາດຕະການເພື່ອປຶກສາຫາລືແລະໃຫ້ໂອກາດແກ່ຊົນເຜົ່າເຂ□າຮ່ວມໃນການຕັດສິນໃຈກ່ຽວກັບໂຄງການຍ່ອຍ, ຖ້າເຂົາເຈ□າຫາກຕ້ອງການ. ຂະບວນການປະເມີນສັງຄົມເອງສ່ວນຫຼາຍ ເປັນວິທີທີ່ຈະໄດ້ດຳເນີນການປຶກສາຫາລື ເຖິງແມ່ນວ່າມັນສາມາດຈັດຕັ້ງມັນຕ່າງຫາກກໍດີ.

11. ນອກຈາກການສິນໃຈພິເສດກັບບັນຫາຊົນເຜົ່າໃນການຊີ້ນຳແລະຕິດຕາມກວດກາ, ຄສລ/ກປສ ຈະລວມເອົາບັນຫາດັ່ງກ່າວເຂ□າໃນບົດລາຍງານຄວາມຄືບໜ້າ. ຄະນະຕິດຕາມຂອງທະນາຄານໂລກຈະເອົາໃຈໃສ່ເປັນພິເສດເປັນແຕ່ລະໄລຍະເພື່ອຮັບປະກັນວ່າໂຄງການຍ່ອຍທີ່ມີຜົນກະທົບຕໍ່ຊົນເຜົ່າໄດ້ນຳເອົາຜົນປະໂຫຍດມາໃຫ້ເຂົາເຈ□າພ້ອມທັງຫຼຸດຜ່ອນຜົນກະທົບທີ່ບໍ່ດີຕ່າງໆ.

## V. ຫຼັກການປຶກສາຫາລືກ່ຽວກັບບັນຫາຊົນເຜົ່າສຳລັບ ຄສລ ເພີ້ມ

12. ຫຼັກການປຶກສາຫາລື ແນໃສ່ຮັບປະກັນວ່າຊົນເຜົ່າໄດ້ຮັບຂ່າວສານ, ຮັບການປຶກສາຫາລືແລະຖືກລະດົມເຂ□າຮ່ວມໃນໂຄງການຍ່ອຍ ຂອງ ຄສລ. ການເຂ□າຮ່ວມຂອງເຂົາເຈ□າຈະເຮັດໃຫ້ເຂົາເຈ□າ ໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ ແລະປ້ອງກັນເຂົາເຈ□າບໍ່ໃຫ້ໄດ້ຮັບຜົນກະທົບຈາກໂຄງການຍ່ອຍທີ່ໄດ້ທຶນຈາກ ຄສລ. ລັກສະນະ/ຂະບວນການຕ□ນຕໍຂອງຫຼັກການປຶກສາຫາລື ມີຂະບວນການກັ່ນກອງ (ກວດ) ເບື້ອງຕ□ນ, ຈາກນັ້ນກໍແມ່ນການປະເມີນຜົນກະທົບດ້ານສັງຄົມ ເພື່ອຮູ້ລະດັບແລະລັກສະນະຂອງແຕ່ລະໂຄງການຍ່ອຍທີ່ ຄສລ ໃຫ້ທຶນ ແລະສ້າງແຜນດຳເນີນງານຖ້າຫາກຮັບປະກັນ. ການປຶກສາຫາລືແລະການເຂ□າຮ່ວມຂອງຊົນເຜົ່າ, ຜູ້ນຳເຂົາເຈ□າແລະພະນັກງານລັດໃນທ້ອງຖິ່ນນັ້ນ ຈະເປັນພາກສ່ວນທີ່ສົມບູນຂອງແຜນພັດທະນາຊົນເຜົ່າ ຊຶ່ງຄວນຖືກກະກຽມໄປພ້ອມກັບບົດລາຍງານຄວາມເປັນໄປໄດ້ຂອງໂຄງການ. ແຜນດັ່ງກ່າວມີພາກສຳຄັນດັ່ງນີ້:

(i) ການກວດເບື້ອງຕ□ນ.

(ii) ການປະເມີນສັງຄົມ.

(iii)ມາດຕະການຫຼຸດຜ່ອນຜົນກະທົບ.

(iv)ການຊ່ວຍເຫຼືອພັດທະນາ.

(v) ການຕິດຕາມກວດກາ.

13. ຄສລ ເພີ້ມ ຈະໃຫ້ທຶນແກ່ແນວລາວສ້າງຊາດແລະແຂວງ ເພື່ອສ້າງບົດແນະນຳແຫ່ງຊາດແລະແຜນພັດທະນາຊົນເຜົ່າຢູ່ແຂວງຢ່າງໜ້ອຍກໍຢູ່ແຂວງບໍລິຄຳໄຊແລະຄຳມ່ວນ ຕາມບົດແນະນຳທີ່ຈະຍົກຂຶ້ນ

ໃນຂໍ້ລຸ່ມນີ້. ການຝຶກອົບຮົມໃຫ້ຜູ້ຈັດຕັ້ງປະຕິບັດແລະອົງການຢູ່ທ້ອງຖິ່ນ ເພື່ອກະກຽມແລະຈັດຕັ້ງປະຕິບັດແຜນພັດທະນາຊົນເຜົ່າ ກໍຈະມີພ້ອມ.

## 5.1. ການກວດເບື້ອງຕ□ນ

14. ເຂດໂຄງການຍ່ອຍທັງໝົດ ຊຶ່ງມີຊົນເຜົ່າແລະເປັນເປ□າໝາຍທີ່ຈະຂໍທຶນຈາກ ຄສລ, ຜູ້ໃຫ້ທຶນແກ່ໂຄງການຍ່ອຍແລະອຳນາດການປົກຄອງທ້ອງຖິ່ນ ພ້ອມທັງພະນັກງານທີ່ມີວຸດທິດ້ານວິທະຍາສາດສັງຄົມແລະມີບົດຮຽນ ຕ້ອງໄດ້ລົງໄປຢ້ຽມຢາມ (ໃນເວລາດຳເນີນການປຶກສາຫາລືກັບຊຸມຊົນຄັ້ງທຳອິດ). ກ່ອນໄປຢ້ຽມຢາມ, ຜູ້ໃຫ້ທຶນໂຄງການຍ່ອຍຈະສົ່ງໃບແຈ້ງການໄປໃຫ້ຊຸມຊົນ ເພື່ອແຈ້ງຜູ້ນຳຂອງເຂົາເຈ□າ ວ່າຜູ້ໃຫ້ທຶນພ້ອມດ້ວຍອຳນາດການປົກຄອງທ້ອງຖິ່ນຈະລົງໄປຢ້ຽມຢາມເຂົາເຈ□າ ແລະປຶກສາຫາລືກັບເຂົາເຈ□າກ່ຽວກັບໂຄງການຍ່ອຍ. ໃບແຈ້ງການຈະສະເໜີໃຫ້ຜູ້ຕາງໜ້າຂອງຊາວກະສິກອນ, ສະຫະພັນແມ່ຍິງແລະຄະນະບ້ານມາຮ່ວມປຶກສາຫາລືກ່ຽວກັບໂຄງການຍ່ອຍ. ໃນເວລາຢ້ຽມຢາມນັ້ນ, ຜູ້ນຳຊຸມຊົນແລະຜູ້ເຂ□າຮ່ວມອື່ນໆ ຈະສະເໜີຄຳເຫັນຕໍ່ໂຄງການຍ່ອຍ.

15. ໃນເວລາມາຢ້ຽມຢາມນີ້, ພະນັກງານ ທີ່ມີວຸດທິແລະມີບົດຮຽນດ້ານວິທະຍາສາດສັງຄົມ ຈະຈັດກຸ່ມເຜົ່າ ໂດຍການຊ່ວຍເຫຼືອຂອງຜູ້ນຳເຜົ່າແລະອຳນາດການປົກຄອງທ້ອງຖິ່ນ. ການຈັດເຜົ່າ ຈະກວມເອົາບັນຫາດັ່ງຕໍ່ໄປນີ້:

    (i) ຊື່ຊົນເຜົ່າໃນບ້ານທີ່ໄດ້ຮັບຜົນກະທົບ.

    (ii) ຈຳນວນຊົນເຜົ່າທັງໝົດ ທີ່ໄດ້ຮັບຜົນກະທົບ.

    (iii) ສ່ວນຮ້ອຍຂອງຊົນເຜົ່າ ທີ່ໄດ້ຮັບຜົນກະທົບ.

    (iv) ຈຳນວນແລະສ່ວນຮ້ອຍຂອງຄອບຄົວຊົນເຜົ່າຢູ່ໃນເຂດທີ່ໂຄງການຍ່ອຍມີອິດທິພົນ. ເຂດດັ່ງກ່າວຄວນລວມເອົາໝົດເຂດ ທີ່ຄາດວ່າຈະໄດ້ຮັບຜົນປະໂຫຍດແລະຜົນກະທົບຂອງໂຄງການຍ່ອຍ.

16. ຖ້າຜົນຂອງການຈັດປະເພດດັ່ງກ່າວຊີ້ໃຫ້ເຫັນວ່າມີຊົນເຜົ່າ, ຕ້ອງໄດ້ວາງແຜນປະເມີນດ້ານສັງຄົມສຳລັບເຂດດັ່ງກ່າວ.

## 5. 2. ການປະເມີນດ້ານສັງຄົມ

17. ການປະເມີນດ້ານສັງຄົມ ຈະເຮັດໂດຍນັກວິທະຍາສາດສັງຄົມ (ຫຼືທີ່ປຶກສາ) ທີ່ມີວຸດທິ. ການປະເມີນດັ່ງກ່າວ ຈະລວບລວມເອົາຂ່າວສານດັ່ງຕໍ່ໄປນີ້: ຂໍ້ມູນປະຊາກອນ; ສະພາບສັງຄົມ, ວັດທະນະທຳແລະເສດຖະກິດ; ຜົນກະທົບດ້ານສັງຄົມ, ວັດທະນະທຳ, ເສດຖະກິດ - ທັງທາງບວກແລະທາງລົບ.

18. ການປຶກສາຫາລືໂດຍບໍ່ໃຫ້ຊົນເຜົ່າເສຍຄ່າ, ເຮັດກ່ອນແລະມີຂ່າວສານຄົບຖ້ວນ ຈະໄດ້ດຳເນີນໂດຍຈັດເປັນກອງປະຊຸມຫຼາຍໆຄັ້ງ ລວມທັງຈັດເປັນກອງປະຊຸມພາຍໃນກຸ່ມຕາງຫາກ: ນາຍບ້ານຂອງຊົນເຜົ່າ, ຜູ້ຊາຍເຜົ່າແລະແມ່ຍິງເຜົ່າ ໂດຍສະເພາະຜູ້ທີ່ດຳລົງຊີວິດຢູ່ໃນເຂດທີ່ຮັບອິດທິພົນຈາກວຽກ

ຂອງໂຄງການຍ່ອຍ. ການປຶກສາຫາລື ຈະສຸມໃສ່ຜົນກະທົບຂອງໂຄງການຍ່ອຍ, ທັງທາງບວກແລະທາງລົບແລະຄຳເຫັນແນະນຳເພື່ອອອກແບບໂຄງການຍ່ອຍ. ຖ້າການປະເມີນດັ່ງກ່າວຊີ້ໃຫ້ເຫັນວ່າຜົນກະທົບ ອາດເກີດຂຶ້ນຈາກໂຄງການຍ່ອຍຫຼາຍຫຼືຊົນເຜົ່າປະຕິເສດໂຄງການຍ່ອຍນີ້, ໂຄງການຍ່ອຍດັ່ງກ່າວ ກໍຈະຖືກປະຕິເສດ (ແລະຈາກນັ້ນກໍບໍ່ຕ້ອງເຮັດຫຍັງຕໍ່). ຖ້າຊົນເຜົ່າສະໜັບສະໜູນການຈັດຕັ້ງປະຕິບັດໂຄງການຍ່ອຍ, ຈະຕ້ອງໄດ້ສ້າງແຜນພັດທະນາຊົນເຜົ່າ ເພື່ອຮັບປະກັນວ່າຊົນເຜົ່າ ຈະໄດ້ຮັບໂອກາດທີ່ເໝາະທາງດ້ານວັດທະນະທຳ ເພື່ອຮັບເອົາຜົນປະໂຫຍດຈາກກິດຈະກຳຂອງໂຄງການຍ່ອຍ ແລະ ແກ້ໄຂບັນຫາຕ່າງໆຫຼືຜົນກະທົບທາງລົບທີ່ຕິດພັນກັບໂຄງການຍ່ອຍ.

### 5.3. ແຜນພັດທະນາຊົນເຜົ່າ

19. ແຜນດັ່ງກ່າວ ຈະອະທິບາຍຂະບວນການແລະຜົນທີ່ໄດ້ຮັບຈາກຂະບວນການດັ່ງກ່າວ ແລະ ຈາກນັ້ນພິຈາລະນາແບບຂອງໂຄງການຍ່ອຍ ເພື່ອຮັບປະກັນວ່າຊົນເຜົ່າຈະໄດ້ຮັບຜົນປະໂຫຍດຈາກກິດຈະກຳຂອງໂຄງການຍ່ອຍ ແລະ ວາງມາດຕະການເພື່ອຫຼຸດຜ່ອນຜົນກະທົບທີ່ບໍ່ດີຕໍ່ເຂົາເຈ□າ. ແຜນດັ່ງກ່າວມີ:

1) ລະບຽບກົດໝາຍ.
2) ຂໍ້ມູນພື້ນຖານ.
3) ກຳມະສິດກ່ຽວກັບທີ່ດິນ.
4) ຂ່າວສານກ່ຽວກັບປຶກສາຫາລືແລະການເຂ□າຮ່ວມຂອງຊຸມຊົນໃນທ້ອງຖິ່ນ.
5) ການຊອກຮູ້ດ້ານເຕັກນິກກ່ຽວກັບການພັດທະນາຫຼືກິດຈະກຳຫຼຸດຜ່ອນຜົນກະທົບ.
6) ກົນໄກການຈັດຕັ້ງ.
7) ຕາຕະລາງຈັດຕັ້ງປະຕິບັດ.
8) ການຕິດຕາມກວດກາແລະການຕີລາຄາ.
9) ມູນຄ່າແລະແຜນສະໜອງທຶນ.

### 5.4. ກົນໄກການຈັດຕັ້ງປະຕິບັດ

20. ຄສລ/ກປສ ຈະຮັບຜິດຊອບຈັດການຝຶກອົບຮົມໃຫ້ຜູ້ໃຫ້ທຶນໂຄງການຍ່ອຍ ຫຼືອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງເພື່ອເຮັດວຽກປຶກສາຫາລື, ກັ່ນກອງ, ປະເມີນຜົນກະທົບດ້ານສັງຄົມ, ວິໄຈແລະກະກຽມແຜນພັດທະນາຊົນເຜົ່າ.

21. ເຈ□າຂອງແຕ່ລະໂຄງການຍ່ອຍແລະອຳນາດການປົກຄອງທ້ອງຖິ່ນ ຈະຮັບຜິດຊອບຈັດຕັ້ງປະຕິບັດແຜນພັດທະນາຊົນເຜົ່າ (ຈັດພະນັກງານ) ແລະ ງົບປະມານໃຫ້ເໝາະສົມ.

## 5.5. ການຕິດຕາມກວດກາ

22. ການຈັດຕັ້ງປະຕິບັດແຜນພັດທະນາຊົນເຜົ່າ ຈະໄດ້ຮັບການຊີ້ນຳແລະຕິດຕາມກວດກາເປັນແຕ່ລະໄລຍະຈາກ ຄສລ/ກປສ. ຜົນທີ່ໄດ້ຮັບແລະຄຳເຫັນແນະນຳ ຈະໄດ້ສະຫຼຸບເຂ□າໃນບົດລາຍງານປະຈຳໄຕມາດແລະສົ່ງໃຫ້ທະນາຄານໂລກ.

23. ໂຄງການຍ່ອຍ ທີ່ມີແຜນພັດທະນາຊົນເຜົ່າ ຈະໄດ້ຮັບການຕິດຕາມກວດກາພາຍນອກຈາກ ອຊນສ, ແນວລາວສ້າງຊາດແລະຈາກທີ່ປຶກສາເອກະລາດທີ່ມີວຸດທິ. ອົງການຫຼືທີ່ປຶກສາຕິດຕາມກວດກາພາຍນອກ ຄວນຈັດຈ້າງມາຕາມເງື່ອນໄຂ (ໜ້າວຽກ) ທີ່ກຳນົດຄວາມຖີ່ຂອງການຕິດຕາມກວດກາ, ວິທີການສຸ່ມແລະການສຳພາດ ແລະເນື້ອໃນທີ່ຈະຕ້ອງລາຍງານ. ບົດລາຍງານການຕິດຕາມກວດກາ ຈະໄດ້ເກັບມ້ຽນຢູ່ ຄສລ/ກປສ ແລະສາມາດເອົາໃຫ້ຄະນະມາເຮັດວຽກຂອງທະນາຄານໂລກ.

## 5.6. ຕາຕະລາງເວລາ

24. ແຜນດັ່ງກ່າວ ຄວນມີຕາຕະລາງເວລາຈັດຕັ້ງປະຕິບັດທີ່ກົມກືນກັບແຜນຈັດຕັ້ງປະຕິບັດໂຄງການຍ່ອຍ. ໃນຕົວຈິງ, ການປະເມີນດ້ານສັງຄົມແລະກອງປະຊຸມກັບຊົນເຜົ່າ ຄວນເຮັດກ່ອນຈະວາງແຜນໃຫ້ແລ້ວ. ການຕິດຕາມກວດກາ ຄວນເຮັດຕາມເວລາທີ່ແນະນຳໃຫ້ໃນໄລຍະເຮັດການກໍ່ສ້າງແລະຫຼັງນັ້ນ.

## 5.7. ງົບປະມານ

25. ແຜນດັ່ງກ່າວ ຈະມີຂ່າວສານກ່ຽວກັບມູນຄ່າລະອຽດສຳລັບມາດຕະການຫຼຸດຜ່ອນຜົນກະທົບ ແລະສິດທິທີ່ໄດ້ຮັບ ເພື່ອຟື້ນຟູເສດຖະກິດຂອງຊົນເຜົ່າໃນເຂດທີ່ໄດ້ຮັບຜົນກະທົບ. ແຫຼ່ງທຶນສຳລັບກິດຈະກຳຕ່າງໆ ແລະແບບສະໜອງທຶນ ຈະຕ້ອງໄດ້ກຳນົດໃນຕາຕະລາງງົບປະມານ

## 5.8. ການລາຍງານ/ການສ້າງເອກະສານ

26. ເຈ□າຂອງໂຄງການຍ່ອຍ ຈະສ້າງແລະສະເໜີແຜນພັດທະນາຊົນເຜົ່າໃຫ້ ຄສລ/ກປສ ແລະທະນາຄານໂລກ ຊຶ່ງທະນາຄານໂລກ ຈະໄດ້ຮັບຮອງກ່ອນເລີ້ມຈັດຕັ້ງປະຕິບັດໂຄງການຍ່ອຍ.

## ເອກກະສານຂັດຕິດ ໆ. ເນື້ອໃນພັດທະນາຊົນເຜົ່າ

### I. ວິທີການວິສາວະກໍາທີ່ດີ

*(ແຫຼ່ງຂ່າວ: ບົດແນະນໍາດ້ານສັງຄົມແລະສິ່ງແວດລ້ອມ, ກອງທຶນຫຼຸດຜ່ອນຄວາມທຸກຍາກ, ເດືອນ 4/2008).*

1.1. ຜົນກະທົບແລະມາດຕະການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ສໍາລັບອາຄານສາທາລະນະ (ເຊັ່ນຫ້ອງການ)

| ກິດຈະກໍາ | ຜົນກະທົບທີ່ອາດເກີດຂຶ້ນ | ມາດຕະການຫຼຸດຜ່ອນຜົນກະທົບທີ່ເປັນໄປໄດ້ |
|---|---|---|
| ***I. ກ່ອນກໍ່ສ້າງ*** | | |
| 1. ປັ້ນດິນຈີ່ | - ລົບກວນຖິ່ນອາໄສ<br>- ສູນເສຍທີ່ດິນ<br>- ທີ່ດິນທີ່ຂຸດໂຊມ<br>- ມົນລະພິດອາກາດຈາກຂີ້ຝຸ່ນ<br>- ຄວາມກົດດັນຕໍ່ ຊັບພະຍາກອນນໍ້າ | - ຍົກຍ້າຍບ່ອນປູກຝັງ<br>- ໃຊ້ຊີມັງແທນ<br>- ເຮັດເປັນໜອງ |
| 2. ເຜົາດິນຈີ່ | - ທໍາລາຍປ່າໄມ້<br>- ມົນລະພິດຈາກຄວັນ | - ປູກປ່າ<br>- ກໍານົດກົດຕາສໍາລັບການກໍ່ສ້າງ<br>- ປ່າຊຸມຊົນເພື່ອສະໜອງໄມ້ປຸກສ້າງ |
| ***II. ເວລາກໍ່ສ້າງ*** | | |
| 1. ວຽກກໍ່ສ້າງ | - ສຽງແລະອາກາດເປັນພິດ<br>- ສ້າງເປັນບໍ່ | - ສ້າງແຫຼ່ງນໍ້າຕື້ມ<br>- ປັບໜ້າດິນ |
| 2. ໂຄງສ້າງ (ໄມ້) | - ທໍາລາຍປ່າ<br>- ສຽງດັງ | - ການສະໜອງໄມ້ໃຫ້ຊຸມຊົນ ຄວນໄດ້ຮັບອະນຸຍາດຈາກ ອໍານາດການປົກຄອງທ້ອງຖິ່ນ<br>- ນໍາໃຊ້ວັດຖຸອື່ນແທນ (ໄມ້ໄຜ່, ເຫຼັກ, ເບຕົງເສີມເຫຼັກ) |
| ***III. ດໍາເນີນງານ*** | | |
| 1. ປະກອບໂຕະຕັ່ງ | - ທໍາລາຍປ່າໄມ້ | - ການສະໜອງໄມ້ໃຫ້ຊຸມຊົນ ຄວນໄດ້ຮັບອະນຸຍາດຈາກ ອໍານາດການປົກຄອງທ້ອງຖິ່ນ<br>- ນໍາໃຊ້ວັດຖຸອື່ນແທນ (ໄມ້ໄຜ່, ເຫຼັກ, ເບຕົງເສີມເຫຼັກ) |

| ກິດຈະກຳ | ຜົນກະທົບທີ່ອາດເກີດຂຶ້ນ | ມາດຕະການຫຼຸດຜ່ອນຜົນກະທົບທີ່ເປັນໄປໄດ້ |
|---|---|---|
| | | - ປູກປ່າ<br>- ກຳນົດກົດຕາສຳລັບການກໍ່ສ້າງ<br>- ປ່າຊຸມຊົນເພື່ອສະໜອງໄມ້ປຸກສ້າງ |
| 1.2. ຜົນກະທົບແລະມາດຕະການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ສຳລັບຫຼຸມ | | |
| 1.) ສະຖານທີ່ | - ເສຍທີ່ດິນ<br>- ດິນຂຸດໂຂມ<br>- ລົບກວນແລະຜົນກະທົບຕໍ່ຄວາມສວຍງາມ | - ປຶກສາກັບຊຸມຊົນ<br>- ຈັດສັນທີ່ດິນຄືນໃໝ່<br>- ປັບໜ້າດິນ (ປູກໄມ້ໃສ່) |
| 2.) ເຈາະຮູ | - ລົບກວນສາຍນ້ຳ, ສັດນ້ຳ<br>- ແຕະຕ້ອງສັງຄົມໂດຍຄ້າຍພັກຂອງກຳມະກອນກໍ່ສ້າງ<br>- ອັນຕະລາຍຈາກການກໍ່ສ້າງ<br>- ພະຍາດຕິດຕໍ່ | - ປູກໄມ້ຄືນ<br>- ກຳນົດບ້ານພັກຂອງກຳມະກອນນອກບ້ານເພື່ອຫຼຸດຜ່ອນຜົນກະທົບດ້ານສັງຄົມ |
| 3.) ຕິດຕັ້ງປ້ຳນ້ຳ | - ນ້ຳໜ້າດິນແລະໃຕດິນ<br>- ປົນເປື້ອນດ້ວຍນ້ຳມັນ | - ຜູ້ເຈາະທີ່ຊ່ຽວຊານເທົ່ານັ້ນ<br>- ນຳໃຊ້ລະບຽບຄວາມປອດໄພທີ່ໄດ້ມາດຕະຖານ |
| 4.) ການດຳເນີນງານ | - ອ່າງເກັບນ້ຳອາດເປັນແຫຼ່ງເພາະພັນຕົວນ້ຳເຊື້ອພະຍາດ (ຍຸງ, ໜອນ)<br>- ນ້ຳອາດປົນເປື້ອນໃນເວລາລຳລຽງແລະເກັບຮັກສາ<br>- ການຊຶມຮົ່ວແລະໄຫຼລ□ນເຮັດໃຫ້ນ້ຳປົນເປື້ອນ<br>- ຄຸນນະພາບນ້ຳຫຼຸດລົງຍ້ອນມີສານປົນເປື້ອນໃນນ້ຳຫຼາຍ<br>- ການດູດນ້ຳອາດເຮັດໃຫ້ລະດັບນ້ຳໃນດິນຕ່ຳລົງອີກ<br>- ແຕະຕ້ອງລະບົບອຸທົກກະສາດ | - ສ້າງແຜນສຶກສາຄຸນນະພາບແລະອານາໄມ<br>- ຮັບປະກັນເງື່ອນໄຂໃຫ້ມີການຄຸ້ມຄອງການດຳເນີນງານແລະບົວລະບັດຮັກສາສິ່ງອຳນວຍຄວາມສະດວກ (ລວມເອົາການຝຶກອົບຮົມພະນັກງານແລະຊຸມຊົນທີ່ດີ) |

1.3. ຜົນກະທົບແລະມາດຕະການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມສໍາລັບໂຄງການຊົນລະປະທານ

| ຜົນກະທົບທີ່ອາດເກີດຂຶ້ນ | ມາດຕະການຫຼຸດຜ່ອນຜົນກະທົບທີ່ເປັນໄປໄດ້ |
|---|---|
| ການເສາະໄຫຼຂອງດິນ | - ອອກແບບເໝາະສົມແລະຫາແນວປ້ອງກັນຫຼືບໍ່ເຮັດໃຫ້ດິນຄ້ອຍຊັນຫຼາຍ<br>- ປັບໜ້າດິນ<br>- ອອກແບບຕັດໜ້າດິນຢູ່ພູບໍ່ໃຫ້ມີການເສາະໄຫຼຫຼາຍ<br>- ຮັກສາປ່າໄມ້ໄວ້ |
| ນໍ້າຖ້ວມ | - ຄວບຄຸມການນໍາໃຊ້ນໍ້າ ເພື່ອບໍ່ໃຫ້ນໍ້າຖ້ວມ<br>- ຕິດຕັ້ງແລະບົວລະບັດຮັກສາລະບົບລະບາຍນໍ້າທີ່ເໝາະສົມ<br>- ນໍາໃຊ້ຄອງທີ່ກໍ່ສ້າງຊີມັງຫຼືບໍ່ເພື່ອບໍ່ໃຫ້ນໍ້າຊຶມລົງໃຕ້ດິນ<br>- ຄິດໄລ່ຄວາມຕ້ອງການຊົນລະປະທານຄັກແນ່ |
| ດິນເຄັມ | - ການເສາະໄຫຼສ້າງເອົາເກືອຈາກດິນທີ່ເສາະໄຫຼມາເປັນແຕ່ລະໄລຍະ<br>- ປູກພືດທີ່ທົນຕໍ່ດິນເຄັມ |
| ຄອງບໍ່ດີ | - ອອກແບບຄອງທີ່ມີຄວາມສ່ຽງຈາກດິນທີ່ໄຫຼໜ້ອຍ,<br>- ເຮັດຄອງທີ່ປູດ້ວຍຫີນ |
| ຄອງຕັນດ້ວຍຕະກອນ | - ມາດຕະການຫຼຸດຜ່ອນການເສາະໄຫຼຂອງດິນ<br>- ອອກແບບແລະຄຸ້ມຄອງຄອງໃຫ້ການໄຫຼຂອງດິນໜ້ອຍລົງ<br>- ສ້າງທາງເຂ□າຫາຄອງເພື່ອຖາງຫຍ້າອອກແລະເອົາຂີ້ຕົມອອກ |
| ເສາະເອົາທາດອາຫານອອກຈາກດິນ | - ຫ້າມບໍ່ໃຫ້ຂັງນໍ້າຫຼາຍ,<br>- ປ່ຽນແທນທາດອາຫານ ໂດຍປູກພືດໝູນວຽນ<br>- ຄິດໄລ່ປຸ໋ຍທີ່ຕ້ອງການໃຫ້ພໍດີ |
| ເທົາແລະຫຍ້າລະບາດ | - ນໍາໃຊ້ປຸ໋ຍໃຫ້ຖືກ (ຄຸນນະພາບ, ປະລິມານ, ເວລາ) |
| ຄອງຕັນຍ້ອນຫຍ້າ | - ອອກແບບແລະຄຸ້ມຄອງຄອງບໍ່ໃຫ້ຫຍ້າເກີດຫຼາຍ |
| | - ສ້າງທາງເຂ□າຫາຄອງເພື່ອປົວແປງແລະເອົາຫຍ້າອອກ |
| ເຮັດໃຫ້ຄຸນນະພາບນໍ້າຊຸດໂຊມຢູ່ຕອນລຸ່ມຂອງ, ໂຄງການຊົນລະປະທານແລະບ່ອນທີ່ນໍ້າປົນເປື້ອນ (ເຄັມຫຼາຍ, ທາດອາຫານຫຼາຍ, ສານເຄມີກະສິກໍາຫຼາຍ) ຊຶ່ງແຕະຕ້ອງຕໍ່ການປະມົງແລະການນໍາໃຊ້ນໍ້າຢູ່ເຂດລຸ່ມ | - ປັບປຸງການຄຸ້ມຄອງນໍ້າ<br>- ປັບປຸງວິທີການຜະລິດກະສິກໍາແລະຄວບຄຸມສິ່ງທີ່ນໍາໃຊ້ (ຢາປາບສັດຕູພືດແລະປຸຍເຄມີ)<br>- ວາງມາດຕະຖານຄຸນນະພາບນໍ້າ |
| ການຊຶມເຂ□າຂອງນໍ້າທະເລໃນລະບົບນໍ້າຈືດ | - ສະຖານທີ່ຂອງໂຄງການ<br>- ຄຸ້ມຄອງນໍ້າໃຫ້ດີ |
| ຫຼຸດກະແສນໍ້າໃຫ້ໄຫຼລົງຊຶ່ງແຕະຕ້ອງຕໍ່ການ | - ການຍົກຍ້າຍແລະອອກແບບໂຄງການຍ່ອຍໃໝ່ |

| ຜົນກະທົບທີ່ອາດເກີດຂຶ້ນ | ມາດຕະການຫຼຸດຜ່ອນຜົນກະທົບທີ່ເປັນໄປໄດ້ |
|---|---|
| ນຳໃຊ້ແລະນິເວດຢູ່ທົ່ງພຽງ, ການປະມົງຕາມສາຍນ້ຳແລະປາກນ້ຳ, ຜູ້ນຳໃຊ້ນ້ຳ, ແລະການເຈືອປົນຂອງມົນລະພິດ | - ຄວບຄຸມການເອົານ້ຳໄປໃຊ້ ເພື່ອຫຼຸດຜ່ອນຜົນກະທົບ<br>- ມາດຕະການຊົດເຊີຍ ເມື່ອເປັນໄປໄດ້ |
| ບຸກລຸກບຶງໜອງແລະລະບົບນິເວດທີ່ບອບບາງ | - ກຳນົດເຂດໂຄງການຍ່ອຍ ໃຫ້ຫຼີກລ້ຽງຫຼືມີການບຸກລຸກເຂ□າໃນເຂດທີ່ສຳຄັນ<br>- ສ້າງເຂດສະຫງວນທົດແທນ |
| ແຕະຕ້ອງສະຖານທີ່ປະຫວັດສາດ, ວັດທະນະທຳຫຼືທັດສະນີຍະພາບ | - ກຳນົດເຂດໂຄງການຍ່ອຍໃຫ້ຫຼີກລ້ຽງຄວາມເສຍຫາຍ<br>- ຍົກຍ້າຍຫຼືປ້ອງກັນສະຖານທີ່ວັດທະນະທຳ |
| ແຕະຕ້ອງຫຼືສູນເສຍປ່າທົ່ງພຽງແລະລົບກວນລະບົບນິເວດຕາມຊາຍຝັ່ງ (ປ່າຊາຍເລນ) | - ກຳນົດເຂດໂຄງການຍ່ອຍເປັນເຂດທີ່ບໍ່ບອບບາງປານໃດ<br>- ຈຳກັດແລະຄວບຄຸມການດູດເອົານ້ຳເພື່ອໃຫ້ມີບັນຫາໜ້ອຍທີ່ສຸດ |
| ການເກີດມີພະຍາດທີ່ພົວພັນຫຼືອາໄສນ້ຳ | - ນຳໃຊ້ຄອງຊີມັງທໍ່ເພື່ອບໍ່ໃຫ້ມີຕົວນຳເຊື້ອ<br>- ຫຼີກລ້ຽງບໍ່ໃຫ້ທໍ່ບໍ່ໄຫຼຫຼືໄຫຼຊ້າ,<br>- ເຮັດປະຕູນ້ຳຢູ່ສ□ນຄອງເພື່ອໃຫ້ສຸດິນອອກງ່າຍ<br>- ປ່ອຍນ້ຳເຂ□າຫຼືອອກຈາກບໍ່ແລະໜອງຢູ່ແຄມຄອງແລະທາງ<br>- ກວດຄຸນນະພາບນ້ຳ<br>- ທຳລາຍເຊື້ອພະຍາດ |
| ບັນຫາພະຍາດແລະສຸຂະພາບຈາກການນຳໃຊ້ນ້ຳຊົນລະປະທານ | - ບຳບັດນ້ຳເປື້ອນ (ເຮັດໜອງກ່ອນຈະເອົານ້ຳມາໃຊ້)<br>- ວາງມາດຕະຖານການນຳໃຊ້ນ້ຳເປື້ອນ |
| ຂໍ້ຂັດແຍ່ງຈາກການສະໜອງນ້ຳແລະຄວາມບໍ່ເທົ່າທຽມໃນການແຈກນ້ຳໃນເຂດທີ່ໃຫ້ການບໍລິການດັ່ງກ່າວ | - ວິທີຮັບປະກັນການແຈກຢາຍນ້ຳໃຫ້ສົມສ່ວນໃຫ້ຜູ້ຊົມໃຊ້ແລະຕິດຕາມເພື່ອເຮັດໃຫ້ໄດ້<br>- ສ້າງສະມາຄົມຜູ້ນຳໃຊ້ນ້ຳໃຫ້ດີ |
| ດູດເອົານ້ຳໃຕ້ດິນຫຼາຍໂພດ | - ຈຳກັດບໍ່ດູດເອົານ້ຳຫຼາຍເພື່ອບໍ່ໃຫ້ມັນເກີນ "ລະດັບຄວາມປອດໄພ" (ອັດຕາທົດນ້ຳຄືນ) |
| ***ພາຍນອກ*** | |
| ຄຸນນະພາບນ້ຳຖືກແຕະຕ້ອງຫຼືໃຊ້ບໍ່ໄດ້ໂດຍຜູ້ນຳໃຊ້ທີ່ດິນຢູ່ເຂດເທິງແລະການປ່ອຍສານພິດລົງມາ | - ຄວບຄຸມການນຳໃຊ້ໜ້າດິນໃນເຂດອ່າງໂຕ່ງ<br>- ຄວບຄຸມແຫຼ່ງມົນລະພິດ<br>- ບຳບັດນ້ຳກ່ອນເອົາມາໃຊ້ |
| ເຂື່ອນຫຼືອ່າງເກັບນ້ຳທີ່ກົດຈະກຳໂຄງການຍ່ອຍຂຶ້ນນຳນັ້ນ ໃຊ້ການບໍ່ໄດ້ | - ກວດເບິ່ງຄວາມປອດໄພຂອງເຂື່ອນແລະອ່າງນ້ຳກ່ອນຈະຈັດຕັ້ງປະຕິບັດໂຄງການຍ່ອຍ |

II. ວິທີເຂດກໍ່ສ້າງທີ່ດີ

***(ແຫຼ່ງ: [http://www.ccohs.ca/oshanswers/hsprograms/cklstcon.html?print](http://www.ccohs.ca/oshanswers/hsprograms/cklstcon.html?print))***

ວິທີການດັ່ງກ່າວພົວພັນກັບການເກັບມ້ຽນ, ການນຳໃຊ້, ການອະນາໄມແລະບຳບັດວັດຖຸຕ່າງໆທີ່ໄດ້ໃຊ້ໃນການກໍ່ສ້າງ ເພື່ອຄວາມປອດໄພຂອງຄົນແລະສິ່ງແວດລ້ອມ. ວິທີທີ່ດີດັ່ງລຸ່ມນີ້ ຕ້ອງໃຫ້ໂຄງການຍ່ອຍທຸກໂຄງການເຮັດມີ:

***<u>ເຮັດໄດ້:</u>***

1.) ເກັບມ້ຽນຂີ້ເຫຍື້ອ ເພື່ອເຮັດໃຫ້ບ່ອນເຮັດວຽກເປັນລະບຽບແລະປອດໄພ.
2.) ວາງແຜນການນຳໃຊ້ຖັງເກັບເສດເຫຼັກ, ຂີ້ເຫຍື້ອແລະວັດສະດຸທີ່ເຫຼືອ.
3.) ຮັກສາເຂດແລະເຄື່ອງມືໃຫ້ໃຊ້ການໄດ້. ກຳນົດບ່ອນຖິ້ມເສດວັດສະດຸແລະເຮັດຖັງ/ອ່າງເກັບມ້ຽນ.
4.) ບໍ່ໃຫ້ມີວັດສະດຸ, ເຄື່ອງມືຫຼືກີດຂວາງຕັ້ນຂັ້ນໃດແລະທາງເດີນ.
5.) ຮັບປະກັນບໍ່ໃຫ້ວັດຖຸເບົາເລັກໆນ້ອຍໆທີ່ເກັບໄວ້ຕາມຫຼັງຄາຫຼືປ່ອງຢ້ຽມທີ່ເປີດຢູ່ ຕົກລົ່ນ.
6.) ເກັບມ້ຽນວັດສະດຸຢ່າງໜ້ອຍ 2ມ ຈາກປ່ອງຢ້ຽມ, ຫຼັງຄາ, ຂຸມແລະຄອງ.
7.) ເອົາຕະປູທີ່ພ□ນຈາກໄມ້ອອກຫຼືຂຶດໄວ້.
8.) ບໍ່ປະທໍ່, ເຊືອກ, ສາຍພານຕ່າງໆ ໄວ້ກາງທີນທາງຫຼືບ່ອນທີ່ຄົນຍ່າງໄປມາຫຼາຍ.
9.) ຮັບປະກັນວ່າປ່ອງຕ່າງໆໄດ້ຖືກປິດຢ່າງດີ.
10.)ຮັບປະກັນໃຫ້ມີວິດໃຫ້ກຳມະກອນໃຊ້.

*<u>ບໍ່ໃຫ້ເຮັດ:</u>*

1.) ບໍ່ໃຫ້ສິ່ງເສດເຫຼືອຕົກລົ່ນມາແຕ່ເບື້ອງເທິງຢູ່ໃນເຂດໂຄງການຍ່ອຍ. ນຳໃຊ້ເຄື່ອງທີ່ເຫັນສົມຄວນ.
2.) ບໍ່ໃຫ້ຖິ້ມເຄື່ອງມືຫຼືວັດສະດຸຕ່າງໆ.
3.) ບໍ່ໃຫ້ເອົາເຄື່ອງມືແລະເຄື່ອງຮັບໃຊ້ຂຶ້ນລົງຕາມສາຍພານຫຼືທໍ່ຂອງມັນເອງ.
4.) ນຳໃຊ້ສາຍດິນຕິດກັບຄອນແທນເນີເພື່ອໃຫ້ກໍ່ໃຫ້ເກີດໄຟຟ້າສະຖິດ.
5.) ໃຫ້ປະກອບເຄື່ອງມອດໄຟທີ່ເໝາະ ສຳລັບວັດຖຸທີ່ມີໃນພາກສະໜາມ. ບ່ອນມ້ຽນເຄື່ອງມອດໄຟຕ້ອງໃຫ້ເຫັນແລະເອົາງ່າຍ.

## ເງື່ອນໄຂສະເພາະສຳລັບວັດສະດຸໄວໄຟ/ລະເບີດ

1. ວັດສະດຸເຄື່ອງໄວໄຟແລະລະເບີດ ເຊັ່ນນ້ຳມັນແອັດຊັງ, ນ້ຳມັນເຄື່ອງແລະນ້ຳຢາອະນາໄມອອກຈາກວັດສະດຸອື່ນໆ.
2. ເກັບເຄື່ອງໄວໄຟແລະລະເບີດໄວ້ໃນຖັງທີ່ມີເຄື່ອງໝາຍບອກຈະແຈ້ງ.
3. ບຳບັດນ້ຳມັນເຄື່ອງ, ນ້ຳມັນລໍ່ລື່ນແລະວັດສະດຸໄວໄຟອື່ນໆໃນກ່ອງ/ຖັງທີ່ດີ.
4. ເກັບຖັງນ້ຳມັນເຕັມໄວ້ໃນບ່ອນທີ່ຖືກຕ້ອງ.
5. ເກັບຖັງເປົ່າໄວ້ຕ່າງຫາກ.

6. ຕິດປ້າຍຫ້າມສູບຢາ, ຫ້າມຈູດໄຟແລະແຫຼ່ງກໍ່ໄຟຕ່າງໆໃນເຂດທີ່ ເກັບມ້ຽນຫຼືນໍາໃຊ້ ເຄື່ອງໄວໄຟແລະລະເບີດ,
7. ເກັບຮັກສາແລະມັດຖັງແກັດໃນບ່ອນທີ່ຖືກຕ້ອງ.
8. ໝາຍຖັງແກັດເປົ່າແລະມ້ຽນໄວ້ຕ່າງຫາກຈາກຖັງເຕັມຫຼືຍັງມີແກັດຢູ່ສ່ວນໃດໜຶ່ງ.
9. ລະບາຍອາກາດໃຫ້ດີໃນເຂດທີ່ເກັບຮັກສາວັດສະດຸເຫຼົ່ານີ້.
10. ຮັບປະກັນວ່າເຄື່ອງໄຟຟ້າແລະກົງຕັກໄຟຕ່າງໆ ບໍ່ລະເບີດເກີດແສງໃນບ່ອນທີ່ເກັບມ້ຽນວັດສະດຸ ໄວໄຟໄວ້.

## III. ຕາງແຜນຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ

ແຜນດັ່ງກ່າວມີ 4 ຫ້ອງ:

- ຫ້ອງ 1, ຜົນກະທົບທີ່ບໍ່ດີທີ່ອາດເກີດຂຶ້ນ: ຂຽນຜົນກະທົບທີ່ບໍ່ດີທີ່ອາດເກີດຂຶ້ນຕໍ່ສິ່ງແວດລ້ອມ ຈາກກິດຈະກໍາຂອງໂຄງການຍ່ອຍທີ່ອາດມີຜົນກະທົບຕໍ່ສິ່ງແວດລ້ອມ. ເບິ່ງບັນຊີມາດຕະການສິ່ງແວດລ້ອມທີ່ໄດ້ສ້າງຂຶ້ນໃນເມື່ອກ່ອນ.
- ຫ້ອງ 2, ມາດຕະການຫຼຸດຜ່ອນຜົນກະທົບທີ່ເປັນໄດ້: ຂຽນມາດຕະການຫຼຸດຜ່ອນຜົນກະທົບສໍາລັບອັນທີ່ເຫັນວ່າຜົນກະທົບທີ່ບໍ່ດີທີ່ອາດເກີດຂຶ້ນຕໍ່ສິ່ງແວດລ້ອມ. ເບິ່ງບັນຊີມາດຕະການ ສິ່ງແວດລ້ອມທີ່ໄດ້ສ້າງຂຶ້ນໃນເມື່ອກ່ອນ.
- ຫ້ອງ 3, ໃຜຮັບຜິດຊອບ: ບອກວ່າໃຜຈະຮັບຜິດຊອບຈັດຕັ້ງປະຕິບັດມາດຕະການດັ່ງກ່າວ. ຕົກລົງກັບຜູ້ມີສ່ວນຮ່ວມ ວ່າໃຜເປັນຜູ້ຮັບຜິດຊອບ.
- ຫ້ອງ 4, ເຮັດເມື່ອໃດ: ບອກວ່າມາດຕະການຫຼຸດຜ່ອນຜົນກະທົບດັ່ງກ່າວ ຈະຈັດຕັ້ງເມື່ອໃດ (ຕົວຢ່າງ ເດືອນ 1 ຂອງໂຄງການຫຼືເດືອນ 1-2 ຂອງໂຄງການ, ອື່ນໆ). ຕົກລົງກັບຜູ້ມີສ່ວນຮ່ວມກ່ຽວກັບກໍານົດເວລາ.

| ຜົນກະທົບທີ່ອາດເກີດຂຶ້ນ | ມາດຕະການຫຼຸດຜ່ອນຜົນກະທົບທີ່ເປັນໄປໄດ້ | ໃຜຮັບຜິດຊອບ? | ເຮັດເມື່ອໃດ? |
|---|---|---|---|
| | | | |
| | | | |
| | | | |
| | | | |